ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ 01/2014)

ຄະນະຮັບຜິດຊອບ ທລຍ ສູນກາງ

*<u>ກະກຽມໂດຍ:</u>* ໜ່ວຍງານຕິດຕາມປະເມີນຜົນ

14 ກຸມພາ 2014

ສາລະບານ


ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ຮອບວຽນທີ 9 ແລະ 10 .......... 1

I. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 9 (ຮອດທ້າຍເດືອນ ມັງກອນ 2014) .......... 1

ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ .......... 1

ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 9 (ຮອດທ້າຍເດືອນ ມັງກອນ 2014) .......... 2

II. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (ຮອດທ້າຍເດືອນ ມັງກອນ 2014) .......... 2

ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ .......... 2

ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 10 (ຮອດທ້າຍເດືອນ ມັງກອນ 2014) .......... 3

III. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (GOL) ຮອດທ້າຍເດືອນ ມັງກອນ 2014 .......... 4

ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ: .......... 4

ຂ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດດ້ານການເງິນ: .......... 4

IV. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການປັບປຸງການຄ້ຳປະກັນສະບຽງອາຫານ ຢູ່ເຂດເນີນສູງຂອງ ສປປ ລາວ (ຮອບວຽນ 9) .......... 5

V. ຄວາມຄືບໜ້າຂອງໜ້າວຽກຂອງແຕ່ລະພະແນກ .......... 6

ກ. ພະແນກພັດທະນາຊຸມຊົນ .......... 6

ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ .......... 6

ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ .......... 7

ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ .......... 8

ຂ. ພະແນກວິສະວະກຳ .......... 8

ຄ. ພະແນກຕິດຕາມ - ປະເມີນຜົນ .......... 8

ຄ.1. ວຽກງານແຜນທີ່ .......... 8

ຄ.2. ວຽກງານການລາຍງານ .......... 8

ຄ.3 ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ) .......... 9

ຄ.4. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS) .......... 9

ຄ.5. ວຽກງານວິໄຈ ແລະ ປະເມີນຜົນ .......... 10

ງ. ພະແນກບໍລິຫານ-ການເງິນ .......... 10

ງ.1. ວຽກງານຈັດຕັ້ງ .......... 10

ງ.2. ວຽກງານຈັດຊື້-ຈັດຈ້າງ .......... 11

ງ.3. ວຽກງານການເງິນ .......... 11

VI. ແຜນດຳເນີນງານ ແຕ່ວັນທີ 01-28 ກຸມພາ 2014 ຂອງແຕ່ລະພະແນກ .......... 12

ກ. ພະແນກພັດທະນາຊຸມຊົນ .......... 12

ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ .......... 12

ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ: .......... 12

ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ .......... 12

ຂ. ພະແນກວິສະວະກຳ .......... 13

ຄ. ພະແນກຕິດຕາມ-ປະເມີນຜົນ .......... 13

ຄ.1. ວຽກງານແຜນທີ່ .......... 13

ຄ.2. ວຽກງານການລາຍງານ....................................................... 13

ຄ.3. ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ) ........................ 13

ຄ.4. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS)...................................... 14

ຄ.5. ວຽກງານວິໄຈ ແລະ ປະເມີນຜົນ................................................ 14

ງ. ພະແນກບໍລິຫານ-ການເງິນ ..................................................... 14

ງ.1. ວຽກງານຈັດຕັ້ງ............................................................. 14

ງ.2. ວຽກງານຈັດຊື້-ຈັດຈ້າງ........................................................ 14

ງ.3. ວຽກງານການເງິນ ........................................................... 15

ເອກະສານຊ້ອນທ້າຍ............................................................. 17

# ການຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ຮອບວຽນທີ 9 ແລະ 10

## *I. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 9 (ຮອດທ້າຍເດືອນ ມັງກອນ 2014)*

### *ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ*

ອີງຕາມການລາຍງານໃນເດືອນທີ່ຜ່ານມາ ໂຄງການທີ່ ທລຍ ຈະຈັດຕັ້ງປະຕິບັດໃນເບື້ອງຕົ້ນຂອງຮອບວຽນ 9 ແມ່ນ 265 ໂຄງການ ພາຍຫລັງຈັດຕັ້ງປະຕິບັດຕົວຈິງມາຮອດທ້າຍເດືອນ ມັງກອນ 2014, ມີ 4 ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ໃນນັ້ນມີດັ່ງນີ້:

- 1 ໂຄງການຈາກ ແຂວງ ຫົວພັນ ເມືອງຊຽງຄໍ້ ກຸ່ມສິບມອນ ບ້ານຕະອ່ອນໃຕ້ ໂຄງການດຶງເຄືອຄ່າຍໄຟຟ້າ ງົບປະມານແມ່ນ 66,300,000 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກງົບປະມານບໍ່ພຽງພໍ.
- 1 ໂຄງການຈາກແຂວງ ເຊກອງ ເມືອງກະລຶມ ກຸ່ມຈ່າແລະ ບ້ານ ຕັງປາ ໂຄງການສ້າງແຜງໂຊລາຜະລິດກະແສໄຟ້າ (Solar cell) ງົບປະມານແມ່ນ 104,000,000 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກພື້ນທີ່ດັ່ງກ່າວລັດຖະບານມີແຜນດຶງຕາຄ່າຍໄຟຟ້າເຂົ້າ.
- ແຂວງ ອັດຕະປື 1 ໂຄງການ ທີ່ເມືອງຊານໄຊ ກຸ່ມນໍ້າງອນ ບ້ານນໍ້າງອນ ໂຄງການກໍ່ສ້າງໂຮງຮຽນ ງົບປະມານແມ່ນ 319,535,465 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງຈາກງົບປະມານບໍ່ພຽງພໍ.
- ແຂວງ ຫລວງນໍ້າທາ 1 ໂຄງການ ທີ່ເມືອງນາແລ ກຸ່ມພູຫລວງ ບ້ານຫາດນາແລ້ງ ໂຄງການກໍ່ສ້າງໂຮງຮຽນ ງົບປະມານແມ່ນ 294,955,317 ກີບ ໂຄງການນີ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ເນື່ອງ ຈາກ ຖືກໂຄງການກໍ່ສ້າງເຂື່ອນ.

ລວມມູນຄ່າທັງໝົດທີ່ບໍ່ໄດ້ຖືກນຳໃຊ້ໃນ 4 ໂຄງການແມ່ນ 784,790,782 ກີບ, ເຊິ່ງມີຜູ້ໄດ້ຮັບຜົນປະໂຫຍດທັງໝົດແມ່ນ 1,329 ຄົນ ເປັນຍິງ 868 ຄົນ ເປັນຊົນເຜົ່າ 970 ຄົນ.

ດັ່ງນັ້ນໂຄງການທີ່ຈັດຕັ້ງປະຕິບັດໃນຮອບວຽນທີ 9 ແມ່ນເຫລືອ 261 ໂຄງການໂດຍມີຄວາມຄືບໜ້າດັ່ງນີ້: ທລຍ ໄດ້ຈັດຕັ້ງປະຕິບັດບັນດາໂຄງການຍ່ອຍໄດ້ທັງໝົດ 261 ໂຄງການ, ກວມເອົາ 100 % ຂອງໂຄງ ການທັງໝົດ ໃນນັ້ນມີຈຳນວນ 258 ໂຄງ ການຍ່ອຍ ຫຼື ເທົ່າກັບ 99 % ແມ່ນໄດ້ປະຕິບັດສຳເລັດແລ້ວ 100 % ແລະ 3 ໂຄງ ການຍ່ອຍ (ຫຼື 1 %) ແມ່ນມີຄວາມຄືບໜ້າໜ້ອຍກວ່າ 50 %, ລາຍລະອຽດຂອງໂຄງການ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມີດັ່ງຕາຕະລາງລຸ່ມນີ້:

<u>ຕາຕະລາງ 1: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 9 (ແຍກຕາມຂະແໜງການ).</u>

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 1 | 0 | 71 | 72 | 24,965,953,346 |
| ສາທາລະນະສຸກ | 0 | 0 | 0 | 10 | 10 | 2,739,649,214 |
| ນໍ້າສະອາດ | 0 | 2 | 0 | 110 | 112 | 19,379,059,065 |
| ກະສິກຳ | 0 | 0 | 0 | 19 | 19 | 3,054,711,097 |
| ຄົມມະນາຄົມ | 0 | 0 | 0 | 45 | 45 | 9,868,848,666 |
| ພະລັງງານ | 0 | 0 | 0 | 3 | 3 | 1,099,325,971 |
| ລວມ | 0 | 3 | 0 | 258 | 261 | 61,107,547,359 |
| ເປີເຊັນ | 0% | 1% | 0% | 99% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

ຕາຕະລາງ 2: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 9 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫລວງນ້ຳທາ | 0 | 0 | 0 | 25 | 25 | 4,661,212,605 |
| ຫົວພັນ | 0 | 0 | 0 | 107 | 107 | 16,944,831,999 |
| ຊຽງຂວາງ | 0 | 0 | 0 | 32 | 32 | 9,198,522,965 |
| ສະຫວັນນະເຂດ | 0 | 0 | 0 | 41 | 41 | 14,739,611,006 |
| ສາລະວັນ | 0 | 0 | 0 | 14 | 14 | 4,264,163,359 |
| ເຊກອງ | 0 | 1 | 0 | 24 | 25 | 7,099,961,353 |
| ອັດຕະປື | 0 | 2 | 0 | 15 | 17 | 4,199,244,072 |
| ລວມ | 0 | 3 | 0 | 258 | 261 | 61,107,547,359 |
| ເປີເຊັນ | 0% | 1% | 0% | 99% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

### ຂ. *ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 9 (ຮອດທ້າຍເດືອນ ມັງກອນ 2014)*

ຄວາມຄືບໜ້າການຈັດຕັ້ງປະຕິບັດດ້ານການເງິນ ມາຮອດທ້າຍເດືອນ ມັງກອນ 2014. ການເບີກຈ່າຍງົບປະ ມານສຳລັບຮອບວຽນ 9 ແມ່ນເຫັນວ່າມີຄວາມລ້າຊ້າເລັກນ້ອຍເມື່ອທຽບກັບຄວາມຄືບໜ້າຂອງກິດຈະກຳຍ່ອຍ. ຊຶ່ງມາຮອດປັດຈຸບັນໂຄງການໄດ້ດຳເນີນການຊຳລະເງິນທັງໝົດຈຳນວນ 57.57 ຕື້ກີບ ຫຼື ເທົ່າກັບ 94.22 % ຂອງຈຳນວນເງິນທັງໝົດ ເພີ່ມຂຶ້ນ 1.34 % ເມື່ອທຽບກັບເດືອນທີ່ຜ່ານມາ, ໃນນັ້ນແຂວງ ຫົວພັນ ຈຳນວນ 16.25 ຕື້ກີບ, ຫຼວງນ້ຳທາ 4.9 ຕື້ກີບ, ສະຫວັນນະເຂດ 13.29 ຕື້ກີບ, ຊຽງຂວາງ 9.00 ຕື້ກີບ, ສາລະວັນ 4.34 ຕື້ກີບ, ເຊກອງ 6.67 ຕື້ກີບ ແລະ ແຂວງ ອັດຕະປື 3.05 ຕື້ກີບ.

ເຫດຜົນໃນການຊຳລະເງິນຊັກຊ້າເນື່ອງຈາກການຈັດຕັ້ງປະຕິບັດໂຄງການໃນເບື້ອງຕົ້ນຊ້າກວ່າທີ່ກຳໜົດໄວ້ ແລະ ນອກນັ້ນແມ່ນມາຈາກຂັ້ນຕອນການກະກຽມເອກະສານການຂໍເບີກຈ່າຍຈາກຂັ້ນ ແຂວງ ແລະ ຂັ້ນເມືອງ, ການຂໍເບີກຈ່າຍໃນແຕ່ລະຄັ້ງແມ່ນໜ່ວຍງານ ທລຍ ຂັ້ນແຂວງ ແລະ ຂັ້ນເມືອງ ຕ້ອງສະຫລຸບການເບີກຈ່າຍໃນເດືອນຜ່ານມາໃຫ້ສຳເລັດເສຍກ່ອນ ຈຶ່ງສາມາດຂໍເບີກຈ່າຍໄດ້. ເຖິງແນວໃດກໍ່ຕາມ, ບັນຫາດັ່ງກ່າວແມ່ນ ໄດ້ຮັບການປັບປຸງ ແລະ ແກ້ໄຂດີຂຶ້ນເທື່ອລະກ້າວ.

## II. *ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (ຮອດທ້າຍເດືອນ ມັງກອນ 2014)*

### ກ. *ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ*

ອີງຕາມການລາຍງານໃນເດືອນທີ່ຜ່ານມາ ໂຄງການທີ່ ທລຍ ຈະຈັດຕັ້ງປະຕິບັດໃນເບື້ອງຕົ້ນຂອງຮອບວຽນ 10 ແມ່ນ 465 ໂຄງການ ພາຍຫລັງຈັດຕັ້ງປະຕິບັດຕົວຈິງມາຮອດທ້າຍເດືອນ ມັງກອນ 2014 ມີ 73 ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້ ດັ່ງນັ້ນໂຄງການຈັດຕັ້ງປະຕິບັດຕົວຈິງແມ່ນ 392 ໂຄງການ (ຊຶ່ງລາຍລະອຽດຕາມເອກະສານຊ້ອນທາຍ)

ສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍຮອບວຽນ 10 ມາຮອດທ້າຍເດືອນ ມັງກອນ 2014, ສາມາດຈັດຕັ້ງປະຕິບັດໂຄງການຍ່ອຍທັງໝົດ 389 ໂຄງການ ຫຼື ກວມເອົາ 99.23 % ຂອງຈຳນວນ ໂຄງການທັງໝົດ 392 ໂຄງການ, ໃນນັ້ນ ມີ 354 ໂຄງການຍ່ອຍ (ຫຼື 90 %) ແມ່ນໄດ້ປະຕິບັດສຳເລັດແລ້ວ 100 % ເພີ່ມຂຶ້ນ 3 % ເມື່ອທຽບກັບເດືອນທີ່ຜ່ານມາ, ໂຄງການຍ່ອຍທີ່ມີຄວາມຄືບໜ້າຫລາຍກວ່າ 50 % ມີ 29 ໂຄງການຍ່ອຍ ຫຼື ເທົ່າກັບ 7 % ແລະ ມີ 6 ໂຄງການຍ່ອຍ (ຫຼື 2 %) ແມ່ນມີຄວາມຄືບໜ້າໜ້ອຍກວ່າ 50 % ແລະ ອີກ 3

ໂຄງການຍ່ອຍ ຫລື ເທົ່າກັບ 1 % ແມ່ນຍັງບໍ່ທັນມີຄວາມຄືບໜ້າ, ລາຍລະອຽດຂອງໂຄງການ ແລະ ຄືບໜ້າຂອງການຈັດຕັ້ງປະຕິບັດມີຄືດັ່ງລຸ່ມນີ້:

ຕາຕະລາງ 3: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 10 (ແຍກຕາມຂະແໜງການ)

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 1 | 10 | 78 | 89 | 23,458,944,147 |
| ຄົມມະນາຄົມ | 2 | 3 | 6 | 95 | 106 | 19,541,949,214 |
| ພະລັງງານ | 0 | 0 | 0 | 7 | 7 | 1,940,653,802 |
| ສາທາລະນະສຸກ | 0 | 0 | 2 | 15 | 17 | 2,545,214,534 |
| ນໍ້າສະອາດ | 1 | 2 | 9 | 140 | 152 | 22,272,260,937 |
| ທຶນສາທາລະນະສຸກ | 0 | 0 | 2 | 0 | 2 | 175,000,000 |
| ກະສິກໍາ | 0 | 0 | 0 | 19 | 19 | 2,571,958,537 |
| ລວມ | 3 | 6 | 29 | 354 | 392 | 72,503,271,471 |
| ເປີເຊັນ | 1% | 2% | 7% | 90% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

ຕາຕະລາງ 4: ຄວາມຄືບໜ້າຂອງໂຄງການຍ່ອຍຮອບວຽນ 10 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຜົ້ງສາລີ | 1 | 1 | 2 | 20 | 24 | 5,061,450,000 |
| ອຸດົມໄຊ | 0 | 1 | 0 | 53 | 54 | 9,959,000,000 |
| ຫລວງພະບາງ | 1 | 0 | 8 | 35 | 44 | 8,680,250,000 |
| ຫຼວງນໍ້າທາ | 0 | 2 | 1 | 26 | 29 | 3,343,755,545 |
| ຫົວພັນ | 0 | 0 | 7 | 82 | 89 | 14,827,659,084 |
| ຊຽງຂວາງ | 0 | 0 | 2 | 32 | 34 | 7,409,929,291 |
| ສະຫວັນນະເຂດ | 0 | 0 | 2 | 54 | 56 | 10,636,545,527 |
| ສາລະວັນ | 0 | 0 | 0 | 19 | 19 | 3,633,297,475 |
| ເຊກອງ | 1 | 2 | 1 | 19 | 23 | 5,224,980,634 |
| ອັດຕະປື | 0 | 0 | 6 | 14 | 20 | 3,706,403,916 |
| ລວມ | 3 | 6 | 29 | 354 | 392 | 72,503,271,471 |
| ເປີເຊັນ | 1% | 2% | 7% | 90% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

## *ຂ. ຄວາມຄືບໜ້າດ້ານການເງິນຂອງຮອບວຽນ 10 (ຮອດທ້າຍເດືອນ ມັງກອນ 2014)*

ຄວາມຄືບໜ້າການຈັດຕັ້ງປະຕິບັດດ້ານການເງິນ ມາຮອດທ້າຍເດືອນ ມັງກອນ 2014. ການເບີກຈ່າຍງົບປະມານສໍາລັບຮອບວຽນ 10 ແມ່ນເຫັນວ່າມີຄວາມລ້າຊ້າເລັກນ້ອຍເມື່ອທຽບກັບຄວາມຄືບໜ້າຂອງກິດຈະກໍາຍ່ອຍ. ຊຶ່ງມາຮອດປັດຈຸບັນ (ທ້າຍເດືອນ ມັງກອນ 2014) ໂຄງການໄດ້ດໍາເນີນການຊໍາລະເງິນທັງໝົດຈໍານວນ 52.14 ຕື້ກີບ ຫຼືເທົ່າກັບ 71.91 % ຂອງຈໍານວນເງິນທັງໝົດ ເພີ່ມຂຶ້ນ 7.20% ເມື່ອທຽບກັບເດືອນທີ່ຜ່ານມາ, ໃນນັ້ນແຂວງ ຫົວພັນ ຈໍານວນ 11.42 ຕື້ກີບ, ສະຫວັນນະເຂດ 6.64 ຕື້ກີບ, ຊຽງຂວາງ 4.64

ຕື້ກີບ, ອັດຕະປື 2.27 ຕື້ກີບ, ເຊກອງ 2.33 ຕື້ກີບ, ສາລະວັນ 2.69 ຕື້ກີບ, ອຸດົມໄຊ 11.24 ຕື້ກີບ, ຫລວງພະບາງ 6.07 ຕື້ກີບ, ຫລວງນໍ້າທາ 1.31 ຕື້ກີບ ແລະ ແຂວງ ຜົ້ງສາລີ ແມ່ນ 3.48 ຕື້ກີບ.

### *III. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (GOL) ຮອດທ້າຍເດືອນ ມັງກອນ 2014*

### *ກ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກຳ:*

ການຈັດຕັ້ງປະຕິບັດໂຄງການຍ່ອຍບ້ວງທຶນສົມທົບຂອງລັດຖະບານ ຈຳນວນທັງໝົດ 86 ໂຄງການນັ້ນ, ມາຮອດທ້າຍເດືອນ ມັງກອນ 2014, ມີ 86 ໂຄງການ ຫຼື ເທົ່າກັບ 100 % ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ *(ລາຍລະອຽດເບິ່ງຕາຕະລາງ 7 ລຸ່ມນີ້)*

ຕາຕະລາງ 7: ຄວາມຄືບໜ້າຂອງໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ມັງກອນ 2014 (ແຍກຕາມຂະແໜງ):

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 0 | 0 | 15 | 15 | 4,121,567,983 |
| ຄົມມະນາຄົມ | 0 | 0 | 0 | 11 | 11 | 2,206,621,934 |
| ພະລັງງານໄຟຟ້າ | 0 | 0 | 0 | 2 | 2 | 637,591,518 |
| ສາທາລະນະສຸກ | 0 | 0 | 0 | 2 | 2 | 224,811,919 |
| ນໍ້າສະອາດ | 0 | 0 | 0 | 40 | 50 | 7,996,147,554 |
| ກະສິກຳ | 0 | 0 | 0 | 6 | 6 | 813,259,092 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

ຕາຕະລາງ 8: ໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ມັງກອນ 2014 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫຼວງນໍ້າທາ | 0 | 0 | 0 | 18 | 18 | 2,239,400,477 |
| ຫົວພັນ | 0 | 0 | 0 | 21 | 21 | 3,493,492,695 |
| ຊຽງຂວາງ | 0 | 0 | 0 | 12 | 12 | 2,487,091,004 |
| ສະຫວັນນະເຂດ | 0 | 0 | 0 | 17 | 17 | 3,594,450,075 |
| ສາລະວັນ | 0 | 0 | 0 | 6 | 6 | 1,396,573,598 |
| ເຊກອງ | 0 | 0 | 0 | 6 | 6 | 1,349,492,008 |
| ອັດຕະປື | 0 | 0 | 0 | 6 | 6 | 1,439,500,143 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

### *ຂ. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດດ້ານການເງິນ:*

ມາຮອດທ້າຍເດືອນ ມັງກອນ 2014, ການຊຳລະສະສາງດ້ານວຽກງານການເງິນ ແມ່ນຍັງບໍ່ທັນໄດ້ມີການເບີກຈ່າຍ ຊຶ່ງເຫັນວ່າມີຄວາມລ້າຊ້າຫຼາຍ ເມື່ອທຽບກັບຄວາມຄືບໜ້າດ້ານກິດຈະກຳ, ການເບີກຈ່າຍເງິນໃຫ້ແກ່ຜູ້ຮັບເໝົາ (ບໍລິສັດທີ່ຊະນະການປະມູນ ແລະ ນາຍຊ່າງຊຸມຊົນ) ຍັງເປັນບັນຫາທ້າທາຍພໍສົມຄວນ. ຫລຍ ໄດ້ຮັບ

ແຈ້ງການຈາກກະຊວງການເງິນວ່າ ການປະກອບສ່ວນ ຂອງ ລັດຖະບານ ຕໍ່ໂຄງການແກ້ໄຂຄວາມທຸກຍາກ ຂອງ ທລຍ ນັ້ນ ຈະມີຄວາມຊັກຊ້າໃນທາງປະຕິບັດອີກໄລຍະໜຶ່ງເພາະວ່າລັດຖະບານ ຍັງພົບກັບການຂາດດຸນງົບປະມານຢູ່.

ເພື່ອແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ, ຄະນະບໍລິຫານໂຄງການ ທລຍ ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ແລະ ຄະນະວິຊາການຂອງຜູ້ໃຫ້ທຶນ ເພື່ອປຶກສາຫາລື ແລະ ໄດ້ກໍານົດມາດຕະການແກ້ໄຂສະເພາະໜ້າດັ່ງລຸ່ມນີ້:

1. ໃນວັນທີ 29 ພະຈິກ 2013, ພະນະທ່ານ ບຸນເຮືອງ ດວງພະຈັນ ໄດ້ເຮັດຈົດໝາຍເຖິງ ທ່ານລັດຖະມົນຕີວ່າການກະຊວງການເງິນເພື່ອສະເໜີພິຈາລະນາເປັນບຸລິມະສິດກ່ຽວກັບງົບປະມານທຶນສົມທົບຂອງລັດຖະບານ ຈໍານວນ 16 ຕື້ ກີບ ສໍາລັບການຈັດຕັ້ງປະຕິບັດ 86 ໂຄງການຍ່ອຍ ຂອງ ສົກປີ 2012-2013.
2. ນອກຈາກນີ້, ໃນວັນທີ 3 ທັນວາ 2013, ທ່ານ ບຸນກວ້າງ ສຸວັນນະພັນ, ຜູ້ອໍານວຍການບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ ໄດ້ເຮັດໜັງສືເຖິງບັນດາຜູ້ຮັບເໝົາ ເພື່ອແຈ້ງໃຫ້ຊາບຄວາມຄືບໜ້າໃນການແກ້ໄຂບັນຫາດັ່ງກ່າວ ລວມທັງສະແດງຄວາມຂອບໃຈຕໍ່ຜູ້ຮັບເໝົາທີ່ໃຫ້ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ.

## *IV. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ໂຄງການປັບປຸງການຄໍ້າປະກັນສະບຽງອາຫານ ຢູ່ເຂດເນີນສູງຂອງ ສປປ ລາວ (ຮອບວຽນ 9)*

ມາຮອດທ້າຍເດືອນ ມັງກອນ 2014, ການຈັດຕັ້ງປະຕິບັດໂຄງການຍ່ອຍພາຍໃຕ້ໂຄງການປັບປຸງການຄໍ້າປະກັນສະບຽງອາຫານຢູ່ ເຂດເນີນສູງຂອງ ສປປລາວ ແມ່ນມີຄວາມຄືບໜ້າຢ່າງພົ້ນເດັ່ນຢ່າງເຫັນໄດ້ຊັດເຈນພໍສົມຄວນ, ຊຶ່ງມາຮອດປັດຈຸບັນ ວຽກງານດັ່ງກ່າວໄດ້ຈັດຕັ້ງປະຕິບັດສໍາເລັດ 100 % ເມື່ອທຽບກັບແຜນການປະຈໍາປີ, ສໍາລັບລາຍລະອຽດທາງດ້ານການເງິນແມ່ນໄດ້ສໍາເລັດການເບີກຈ່າຍແລ້ວ 100% ຂອງຈໍານວນເງິນທັງໝົດ ສ່ວນລາຍລະອຽດຂອງຄວາມຄືບໜ້າແມ່ນມີຄືດັ່ງລຸ່ມນີ້.

ຕາຕະລາງ 3: ຄວາມຄືບໜ້າຂອງໂຄງການຍ່ອຍ LUFSIP ຮອດທ້າຍເດືອນ ມັງກອນ 2014 (ແຍກຕາມຂະແໜງ):

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຄົມມະນາຄົມ | 0 | 0 | 0 | 11 | 12 | 1,786,348,495 |
| ພະລັງງານໄຟຟ້າ | 0 | 0 | 0 | 1 | 1 | 165,000,000 |
| ນໍ້າສະອາດ | 0 | 0 | 0 | 5 | 5 | 7,804,962,057 |
| ກະສິກໍາ | 0 | 0 | 0 | 72 | 77 | 8,272,346,792 |
| ລວມ | 0 | 0 | 0 | 89 | 89 | 10,223,695,287 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

ຕາຕະລາງ 4: ຄວາມຄືບໜ້າຂອງໂຄງການຍ່ອຍ LUFSIP ຮອດທ້າຍເດືອນ ມັງກອນ 2014 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫລວງນ້ຳທາ | 0 | 0 | 0 | 17 | 18 | 2,149,083,386 |
| ຫົວພັນ | 0 | 0 | 0 | 46 | 46 | 4,400,553,400 |
| ຊຽງຂວາງ | 0 | 0 | 0 | 8 | 8 | 841,643,323 |
| ສະຫວັນນະເຂດ | 0 | 0 | 0 | 18 | 18 | 2,832,415,177 |
| ລວມ | 0 | 0 | 0 | 89 | 89 | 10,223,695,287 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ມັງກອນ 2014

## V. *ຄວາມຄືບໜ້າຂອງໜ້າວຽກຂອງແຕ່ລະພະແນກ*

### ກ. *ພະແນກພັດທະນາຊຸມຊົນ*

### ກ.1. *ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ*

ໃນວັນທີ່ 10 ມັງກອນ 2014 ສຳເລັດການຝຶກອົບຮົມໃຫ້ແກ່ພະນັກງານ ໂຄງການປັບປຸງຊີວິດການເປັນຢູ່ດ້ານໂພສະນາການ (ຄປພ) 2 ຊຸດ, ໃນນັ້ນຢູ່ເມືອລວງງທອງ ແຂວງ ຫົວພັນ ແລະ ເມືອງເຊໂປນ ແຂວງ ສະຫັວນ ນະເຂດ ແລະ ພ້ອມທັງສຳເລັດການແຈກຢາຍຕູ້ຮັບຄຳເຫັນ ໃນທຸກເມືອງເປົ້າໝາຍຂອງ ທລຍ ແຂວງ ສະຫວັນນະເຂດ ແລະ ແນະນຳໃຫ້ຕິດ ປົດສະເຕີສີເຫຼືອງ ແຈ້ງ ເບີໂທລະສັບສາຍດ່ວນ ກ່ຽວກັບ ກສກ 161 ທຸກໆ ກະດານຂ່າວຂອງກຸ່ມບ້ານ ແລະ ບ້ານ ນອກນີ້ຍັງສຳເລັດການລົງຊຸກຍູ້ການປົກປັກຮັກສາຄຸ້ມຄອງນຳໃຊ້ ໂຄງການນ້ຳປະປາຊຸມຊົນ ຢູ່ບ້ານ ທ່າພີ່ ກຸ່ມ 9 ເມືອງ ທ່າປາງທອງ, ບ້ານ ຂະໜີນ ກຸ່ມ 4 (ໂຮງຮຽນ ແລະ ນ້ຳບາດານ) ,ບ້ານ ໜອງຫຼວງ ກຸ່ມ 9 (ຂົວຈົມ) ບ້ານ ຕາດໄຮເຊ ກຸ່ມ 11 (ສ້ອມແປງເສັ້ນທາງ) ເມືອງພີນ.

ສຳເລັດກອງປະຊຸມກ່ຽວກັບການສຳຫຼວດໂຄງການຍ່ອຍຮອບວຽນທີ 12 ແລະ ສຳເລັດການຝຶກອົບຮົມກັບໃຫ້ ຜູ້ປະສານງານກຸ່ມ ໃນການຄຸ້ມຄອງໂຄງການຍ່ອຍເພື່ອປັບປຸງ ໃຫ້ກາຍເປັນບ້ານຕົວແບບ. ປະກອບມີບ້ານຫ້ວຍຫວ້າ ກຸ່ມກະແຫລງ, ບ້ານຕຸ້ມລານ ກຸ່ມຕຸ້ມລານ ,ບ້ານສະໂນ ກຸ່ມກົກມ່ວງ ເມືອງຕຸ້ມລານ ແລະ ບ້ານທົ່ງກາໄຮ່, ບ້ານປະໂສມ, ບ້ານລຶກດົງ ກຸ່ມປະໂສມ ຂອງເມືອງຕະໂອ້ຍ ແຂວງ ສາລະວັນ.

ສຳລັບແຂວງຜົ້ງສາລີ ໄດ້ສຳເລັດການປຸກລະດົມສ້າງບ້ານຕົວແບບເຊັ່ນ: ເມືອງຂວາ ບ້ານນ້ຳບຸດບ້ານກິວກະແຫຼະ ແລະ ເມືອງສຳພັນ ບ້ານອາເຊີ, ພ້ອມທັງຕັ້ງກະດານຂ່າວຂັ້ນບ້ານ ແລະ ເກັບມ້ຽນເອກະສານໃຫ້ເປັນລະບຽບ.

ໃນຂັ້ນເມືອງແມ່ນໄດ້ພົວພັນ ປະສານງານກັບຫ້ອງການທີ່ກ່ຽວຂ້ອງເພື່ອລົງຊຸກຍູ້ຕິດຕາມວຽກງານປົກປັກຮັກສາແລະຄຸ້ມຄອງນຳໃຊ້ ການຮ່ວມລົງສຳຫຼວດ ໂຄງການຮອບວຽນທີ່ 12 ລົງຮ່ວມຊຸກຍູ້ການກະ ກຽມ ການປະເມີນໂຄງການ ພ້ອມທັງລົງຊຸກຍູ້ ແລະ ແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານຮອບວຽນທີ່ 11 ໃຫ້ແກ່ພະນັກງານ ທລຍ ຊຸມຊົນຢູ່ແຕ່ລະ ແຂວງ.

ສຳເລັດຈັດກອງປະຊຸມປະເມີນ ແລະ ສະຫລຸບຜົນການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳປີ ຂັ້ນແຂວງ ຢູ່ແຂວງ ເຊກອງ ທີ່ຈະຈັ້ດຂຶ້ນໃນຕົ້ນເດືອນ ມັງກອນ 2014 ແລະ ສືບຕໍ່ຊຸກຍູ້ການຕິດຕັ້ງຕູ້ຮັບຄຳເຫັນຢູ່

ສອງເມືອງເປົ້າໝາຍໃໝ່ ຄືເມືອງໄຊ ແຂວງ ອຸດົມໄຊ ແລະ ເມືອງຈອມເພັດ ແຂວງ ຫລວງພະບາງ ໃນບ້ານທີ່ຍັງບໍ່ໄດ້ຕິດຕັ້ງແລ້ວ.

## *ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ*

### ກ.2.1. ວຽກງານ ເວັບໄຊ:

ລົງຂ່າວຢູ່ໃນເວບໄຊ້ຂອງ ທລຍ ແລະ ສົ່ງໃຫ້ໜັງສືພິມ 3 ເລື່ອງ ຄື: ການຈັດຊຸດອົບຮົມ ການເປັນຜູ້ອໍານວຍຄວາມສະດວກ ໃຫ້ພະນັກງານ LONG ເມືອງ ວຽງທອງ ແຂວງຫົວພັນ ແລະ ເມືອງເຊໂປນ ແຂວງ ສະຫັວນນະເຂດ, ກອງປະຊຸມ ປະສານງານວາງແຜນ ຂັ້ນເມືອງ ທົ່ວແຂວງ ເຊກອງ.

ລົງຂໍ້ມູນບົດສະເໜີກ່ຽວກັບໂຄງການ LUSIP 1 ບົດ, ກ່ຽວກັບການຈັດຕັ້ງປະຕິບັດໂຄງການຄໍ້າປະກັນສະບຽງອາຫານໃນເຂດເນີນສູງຂອງ ສປປ ລາວ ແລະ ລົງຂໍ້ມູນດ້ານສະຖິຕິກ່ຽວກັບການໃຫ້ການສະໜັບສະໜູນຊ່ວຍເຫຼືອ ຊຸມຊົນບ້ານເປົ້າໝາຍຂອງ ທລຍ ຮອບວຽນ 9 ແລະ 10 ທີ່ຜ່ານມາ ຂອງ ພະແນກຕິດຕາມປະເມີນຜົນ ຈໍານວນ 2 ບົດ ພ້ອມທັງແຜນທີ່ 6 ເມືອງເປົ້າໝາຍຂອງ ທລຍ ແລະ ຂໍ້ມູນກ່ຽວກັບວຽກງານບໍລິຫານການເງິນ 2 ບົດ ຄື: ຄູ່ມືການບໍລິຫານເງິນຂອງຊຸມຊົນ ແລະ ຄູ່ມືກ່ຽວກັບວຽກງານຈັດຊື້-ຈັດຈ້າງ ຂອງຊຸມຊົນ.

ລົງປົດສະເຕີໂຄສະນາກ່ຽວກັບວຽກງານເຕັກນິກຈໍານວນ 10 ຫົວຂໍ້ທີ່ກ່ຽວຂ້ອງກັບແຜນຜັງອົງປະກອບຂອງເຂື່ອນດິນຂະໜາດນ້ອຍ, ແຜນຜັງອົງປະກອບຂອງຝາຍນໍ້າລົ້ນ, ເຂດພື້ນທີ່ເປົ້າໝາຍຂອງ ທລຍ, ອົງປະກອບຂອງໂຮງຮຽນ, ອົງປະກອບຂອງລະບົບນໍ້າລິນ, ຄຸນນະພາບຂອງວັດສະດຸສໍາລັບການກໍ່ສ້າງໂຄງການຍ່ອຍ, ຄວາມຮັບຜິດ ຊອບຂອງປະຊາຊົນຕໍ່ການຄຸ້ມຄອງໂຄງການ ແລະ ການເບີກຈ່າຍງົບປະມານສໍາລັບໂຄງການກໍ່ສ້າງນໍ້າລິນທີ່ຊຸມຊົນເຮັດເອງ.

ລົງຂໍ້ມູນສະປອດໂຄສະນາ 2 ເລື່ອງຄື: ແນະນໍາໂຄງການ ທລຍ ພາສາລາວ ແລະ ພາສາ ກຶມມຸ ແລະ ສະປອດກ່ຽວກັບ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເປັນພາສາລາວ.

### ກ.2.2 ການກະຈາຍຂ່າວທາງວິທະຍຸ ແລະ ໜັງສືພິມ:

ລາຍການ ວິທະຍຸຮອບບ້ານຜ່ານເມືອງ ໄດ້ສໍາພາດ ທ່ານ ພູຕາວັນ ອິນທເວີງ ຫົວໜ້າທີມງານ ທລຍ ເມືອງຫົວຂໍ້ເລື່ອງ: ຊີວິດໃຫມ່ຂອງເດັກນ້ອຍນັກຮຽນ ບ້ານໂຮມທອງ ກຸ່ມບ້ານສິບເລົ້າ ເມືອງຫົວເມືອງ ແຂວງ ຫົວພັນ, ສໍາພາດ ທ່ານ ສຸບັນ ນາມມະໄຊ ຫົວໜ້າທີມງານ ເມືອງລະມາມ ເລື່ອງ: ຜົນສໍາເລັດກອງປະຊຸມຮັບຮອງແບບ ຮອບວຽນທີ່ 11 ວັນທີ່ 29 ມັງກອນ 2014, ສໍາພາດ ທ່ານບົວລີ ເຂັມຄໍາ ຜູ້ປະສານງານ ທລຍ ແຂວງ ສາລະວັນ ເລື່ອງ: ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ແລະ ແຜນການສູ້ຊົນໃນຕໍ່ໜ້າ.

ທລຍ ແຂວງ ເຊກອງ ໄດ້ອອກຂ່າວ ທາງລາຍການ ວິທະຍຸແຂວງ, ເມືອງດາກຈຶງ ສົ່ງໃຫ້ລາຍການວິທະຍຸຂັ້ນສູນກາງ 2 ຂ່າວ ຄື: ຂ່າວກ່ຽວກັບຊຸມຊົນທີໄດ້ສະແດງຄວາມດີໃຈທີ່ມີນໍ້າໃຊ້ ແລະ ໂຮງຮຽນໃຫ້ລູກຫລານ ທີ່ບ້ານປາກໂທນ ເຮັດໃຫ້ເດັກນ້ອຍມີໂອກາດໃນການສຶກສາຮໍ່າຮຽນ.

ໃນ 6 ເມືອງເປົ້າໝາຍ ຂອງ ແຂວງ ອຸດົມໄຊ ໄດ້ຂຽນຂ່າວກະຈາຍອອກທາງວິທະຍຸ ແລະ ໂທລະໂຂ່ງ ຈໍານວນ 12 ຂ່າວ ເຊັ່ນ: ຂຽນຂ່າວກ່ຽວກັບ ຜົນສໍາເລັດການຈັດກອງປະຊຸມລາຍງານແລະຮັບຮອງເອົາແຜນພັດທະນາກຸ່ມບ້ານໃນຮອບວຽນ 11, ຂຽນຂ່າວຜົນສໍາເລັດຂອງການກໍ່ສ້າງໂຮງຮຽນປະຖົມ ບ້ານນາຖົ່ວ ກຸ່ມນາທົ່ງ ເມືອງນາໝໍ້ ແຂວງ ອຸດົມໄຊ.

ແຂວງ ສາລະວັນ ໄດ້ຂຽນຂ່າວອອກໜັງສືພິມ ສາລະວັນ ແລະ ສົ່ງໃຫ້ວິທະຍຸຊຸມຊົນ 3 ເມືອງເປົ້າໝາຍ 2 ເລື່ອງຄື: ທລຍ ສາລະວັນ ລົງທຶນ 8 ຕື້ກວ່າກີບ ໃສ່ 3 ເມືອງພູດອຍ ແລະ ບ້ານທົ່ງກາໄຮ ສາມັກຄີຄຸ້ມຄອງນໍ້າລິນ ແລະ ເມືອງດາກຈຶງ, ເມືອງກະລຶມ ແລະ ເມືອງລະມາມ ແຂວງເຊກອງ ໄດ້ນໍາໃຊ້ ປົດສະເຕີ 10 ລະບຽບການ ແລະປົດສະເຕີ ກົນໄກສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ ຢູ່ໃນເວລາຈັດກອງປະຊຸມຂັ້ນບ້ານ.

### ກ.2.3 ການຜະລິດເຄື່ອງມື ກະຈາຍຂໍ້ມູນຂ່າວສານ:

ສຳເລັດການຈັດພິມປື້ມສັງລວມຫຍໍ້ ແນະນຳໂຄງການ ທລຍ II, ແຟ້ມໃສ່ເອກະສານ, ປົດສະເຕີຮອບວຽນໂຄງການ 100 % ແລະ DVD ແນະນຳໂຄງການ ພາສາ ລາວລຸ່ມ, ກຶມມຸ ແລະ ມົ້ງ, ພ້ອມທັງສຳເລັດການຜະລິດສະປອດ ໂຄສະນາ ທາງວິທະຍຸ ແລະ ໂທລະພາບ ກ່ຽວກັບ ບົດບາດ ຍິງ-ຊາຍ ສະບັບດັດຕໍ່ທີ່ 2 ແລະ ສຳເລັດການຜະລິດສະປອດໂຄສະນາ ທາງວິທະຍຸ ແລະ ໂທລະພາບ 2 ເລື່ອງ ເປັນ ພາສາລາວຄື: ແນະນຳໂຄງການ ທລຍ ແລະ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ພ້ອມທັງສຳເລັດ ການອອກແບບປື້ມສັງລວມໂດຍຫຍໍ້ກ່ຽວກັບການຄຸ້ມຄອງບໍລິຫານການເງິນຊຸມຊົນ ແລະ ຈັດຊື້-ຈັດຈ້າງໂດຍຊຸມຊົນ.

### *ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ*

ໃນລະຫວ່າງວັນທີ 13-30 ມັງກອນ 2014 ທີ່ຜ່ານມານີ້ ຄະນະຮັບຜິດຊອບກອງທຶນຫລຸດຜ່ອນຄວາມທຸກຍາກຂັ້ນສູນກາງໂດຍສົມທົບກັບ ຊ່ຽວຊານທີ່ປຶກສາໄດ້ຈັດຝຶກອົບຮົມ ວຽກງານບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ໃຫ້ພະນັກງານ ທລຍ ໃນແຕ່ລະຂັ້ນ ເລີ່ມຈາກຂັ້ນສູນກາງຫາຂັ້ນເມືອງ ລວມທັງໝົດ 8 ຊຸດ (ສູນກາງ 1 ຊຸດ, ແຂວງ 3 ຊຸດ ແລະ ເມືອງອີກ 4 ຊຸດ), ຊຶ່ງໄດ້ຈັດຝຶກອົບຮົມໃຫ້ພະນັກງານ ທລຍ ຂັ້ນເມືອງ (ພະນັກງານການເງິນ, ພັດທະນາຊຸມຊົນ ແລະ ຕິດຕາມປະເມີນຜົນຂັ້ນແຂວງ) ຈາກ 8 ແຂວງ 14 ເມືອງ, ລວມຜູ້ເຂົ້າຮ່ວມທັງໝົດ 72 ທ່ານ ຍິງ 25 ທ່ານ.

### *ຂ. ພະແນກວິສະວະກຳ*

ໄດ້ສຳເລັດການສ້າງປື້ມຄູ່ມືກ່ອນການຈັດຕັ້ງປະຕິບັດ ແລະ ປື້ມຄູ່ມືຝຶກອົບຮົມການປົກປັກຮັກສາໂຄງການຍ່ອຍ ໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານຊຶ່ງ ເປັນບ້ານເປົ້າໝາຍຂອງ ທລຍ ແລະ ຕິດຕາມການຈ່າຍເງິນໂຄງການຍ່ອຍຮອບວຽນ 9 ແລະ 10 ເຊິ່ງປັດຈຸບັນມີຄວາມຄືບໜ້າປະມານ 90 %. ພ້ອມນີ້ໄດ້ສຳເລັດການກະກຽມບົດສະເໜີຂໍງົບປະມານເພື່ອເອົາຊຸມຊົນເຂດພາກເໜືອມາທັດສະນະຢູ່ ນະຄອນຫລວງວຽງຈັນ ຂອງໂຄງການ (ຄປຄສ-LUFSIP).

### *ຄ. ພະແນກຕິດຕາມ - ປະເມີນຜົນ*

### *ຄ.1. ວຽກງານແຜນທີ່*

ສຳເລັດການກະກຽມແຜນທີ່ ທລຍ 1 ແລະ 2 ພາກພາສາອັງກິດໃຫ້ 5 ແຂວງຄື: ແຂວງຫລວງນ້ຳທາ, ອຸດົມໄຊ, ຫົວພັນ, ສາລະວັນ ແລະ ແຂວງ ສະຫວັນນະເຂດ ເພື່ອກະກຽມໃນການລົງມາຢ້ຽມຢາມຂອງທີມງານຜູ້ໃຫ້ທຶນ ພ້ອມນີ້ຍັງໄດ້ສຳເລັດກະກຽມການຈັດຝຶກອົບຮົມ ການສ້າງແຜນທີ່ ຂັ້ນບ້ານ ໃຫ້ແກ່ພະນັກງານ ພະແນກຕິດຕາມປະເມີນຜົນ ທັງ 10 ແຂວງ ຂອງ ທລຍ ທີ່ຈະຈັດຂຶ້ນ ວັນທີ່ 24-28 ກຸມພາ 2014.

ສືບຕໍ່ການກະກຽມສ້າງແຜນທີ່ຈຸດທີ່ຕັ້ງໂຄງການ ຊື່ບ້ານ ຊື່ໂຄງການ ຂອງ ທລຍ ທັງ 10 ແຂວງ ໃນຮອບວຽນ 11.

### *ຄ.2. ວຽກງານການລາຍງານ*

ກະກຽມ ແລະ ເຮັດບົດລາຍງານປະລາຍງານປະຈຳປີ 2013 ຂອງຮອບວຽນ 10 ພ້ອມທັງສະໜອງຂໍ້ມູນກາງສະໄໝໃຫ້ຜູ້ໃຫ້ທຶນ.

### *ຄ.3 ວຽກງານ ກສກ (ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ)*

ຕິດຕາມ ແລະ ຕອບຮັບ ຄຳຄິດເຫັນຜ່ານທາງອີເມລ, ສາຍດ່ວນ 161 ແລະ ການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານ ກສກ ໃນ 10 ແຂວງເປົ້າຫມາຍຂອງ ທລຍ ພ້ອມທັງເຮັດບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ ປະຈຳເດືອນ ມັງກອນ 2014.

ສະຫຼຸບ ແລະ ເຮັດບົດລາຍງານລວມ ຄວາມຄືບໜ້າຂອງໜ້າວຽກ ກສກ ປະຈຳເດືອນ ທັນວາ 2013 ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊຶ່ງໃນເດືອນ ທັນວາ 2013 ນີ້ມີຈຳນວນຄຳຄິດເຫັນທັງໝົດແມ່ນ 1,414 ຄຳຄິດເຫັນ ເຊິ່ງໃນນັ້ນຄຳເຫັນທີ່ກ່ຽວຂ້ອງກັບ ທລຍ ມີ 31 ຄາເຫັນ, ເຊິ່ງ 30 ຄຳຄິດເຫັນແມ່ນໄດ້ຮັບຈາກຕູ້ຮັບຄຳຄິດເຫັນຈາກ 10 ແຂວງເປົ້າໝາຍຂອງ ທລຍ ແລະ 1 ຄຳຄິດເຫັນແມ່ນຜ່ານທາງ ສາຍດ່ວນ 161 ສ່ວນທີ່ເຫລືອ 1,383 ຄຳເຫັນແມ່ນບໍ່ກ່ຽວຂ້ອງກັບ ທລຍ ລາຍລະອຽດດັ່ງລຸ່ມນີ້:

<u>ຕາຕະລາງສັງລວມຄຳຄິດເຫັນ ເດືອນ ທັນວາ 2013</u>

| | ສາຍ | ອີ | ຕູ້ຮັບຄຳຄິດເຫັນ | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| ຄຳຄິດເຫັນທີ່ໄດ້ຮັບ | ດ່ວນ161 | ເມລ | ຊຂ | ຊກ | ອປ | ສວ | ຫຼທ | ສຂ | ຫພ | ຫຼບ | ອຊ | ພລ | ລວມ |
| ຕ້ອງການຂໍ້ມູນເພີ່ມເຕີມ | - | - | - | - | - | - | 2 | - | - | - | - | - | 2 |
| ຂໍທຶນຊ່ວຍເຫລືອ | - | 1 | - | - | - | - | 4 | - | 1 | 11 | - | - | 17 |
| ຂອບໃຈ ທລຍ | - | - | 1 | - | - | - | 3 | - | - | 8 | - | - | 12 |
| ຮ້ອງຮຽນກ່ຽວກັບວຽກ ທລຍ | - | - | - | - | - | - | - | - | - | - | - | - | - |
| ຄຳຄິດເຫັນທີ່ບໍ່ກ່ຽວຂ້ອງກັບ ທລຍ | 1,330 | 53 | - | - | - | - | - | - | - | - | - | - | 1,383 |
| ລວມ | 1,330 | 54 | 1 | - | - | - | 9 | - | 1 | 19 | - | - | 1,414 |
| ລວມ ຄຳຄິດເຫັນທີ່ກ່ຽວກັບ ທລຍ | - | 1 | 1 | - | - | - | 9 | - | 1 | 19 | - | - | 31 |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ທັນວາ 2013

### *ຄ.4. ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS)*

ສັງລວມຂໍ້ມູນແຜນພັດທະນາຂັ້ນກຸ່ມບ້ານຈາກລະບົບຖານຂໍ້ມູນຮອບວຽນ 9 ມີ 183 ກຸ່ມບ້ານຂອງຈຳນວນທັງໝົດ 185 ກຸ່ມ, ຮອບວຽນ 10 ມີ 268 ກຸ່ມບ້ານຂອງຈຳນວນທັງໝົດ 269 ກຸ່ມບ້ານ ເຊິ່ງແຂວງທີ່ຍັງບໍ່ຄົບຖ້ວນໃນຮອບວຽນ 9 ແມ່ນແຂວງ ຫົວພັນ 2 ກຸ່ມ ຢູ່ ເມືອງຫົວເມືອງ 1 ກຸ່ມ ແລະ ຊຽງຄໍ້ 1 ກຸ່ມ, ແຂວງທີ່ຍັງບໍ່ຄົບໃນຮອບວຽນ 10 ມີຢູ່ແຂວງ ຫົວພັນ 1 ກຸ່ມຄື ຢູ່ເມືອງຊຳໃຕ້ ປະຈຸບັນໃດ້ພົວພັນກັບແຂວງ ແລະ ກຳລັງຕິດຕາມຄວາມຄືບໜ້າ ແລະ ພ້ອມກັນນີ້ຍັງໄດ້ສັງລວມຈຳນວນຜູ້ໄດ້ຮັບຜົນປະໂຫຍດຂອງການຈັດຕັ້ງປະຕິບັດວຽກງານຂອງ ທລຍ ໃນຮອບວຽນ 9 ຮອບວຽນ 10 ຈາກລະບົບຖານຂໍ້ມູນເຊິ່ງມີ 258 ບ້ານ, 19,684 ຄອບຄົວ, ເທົ່າກັບ 117,439 ຄົນ, ເປັນຍິງ 58,045 ຄົນ, ແຍກເປັນຈຳນວນປະຊາກອນຜູ້ທຸກຍາກ 60,591 ຄົນ ເປັນຍິງ 28,365 ຄົນ, ອາຍຸຕໍ່າກວ່າ 14 ປີ 45,827 ຄົນ.

ໃຫ້ຄວາມຊ່ວຍເຫລືອແກ່ພະນັກງານ ຕິດຕາມແລະປະເມີນຜົນຂັ້ນແຂວງ ເພື່ອຕິດຕາມເອົາຂໍ້ມູນທີ່ຍັງບໍ່ຄົບມາຕື່ມໃສ່ໃນລະບົບຖານຂໍ້ມູນໃຫ້ຖືກຕ້ອງ ແລະ ຄົບຖ້ວນ ແລະ ພົວພັນບໍລິສັດທີ່ປຶກສາ APIS ເພື່ອບຳລຸງຮັກສາ ແລະ ພັດທະນາລະບົບຖານຂໍ້ມູນ ເພື່ອຮັບໃຊ້ວຽກງານ ທລຍ ໃຫ້ມີຄວາມສະດວກໃນຕໍ່ໜ້າ ໂດຍເນັ້ນໃສ່ທາງບໍລິສັດ APIS ສາມາດດຶງເອົາຂໍ້ມູນລາຍຊື່ບັນດາບໍລິສັດທີ່ເຂົ້າຮ່ວມເປີດຊອງປະມູນຂັ້ນບ້ານ ພ້ອມທັງລາຄາການປະມູນຂອງແຕ່ລະບໍລິສັດທີ່ຍື່ນປະມູນອອກມາເພື່ອນຳໃຊ້.

### *ຄ.5. ວຽກງານວິໄຈ ແລະ ປະເມີນຜົນ*

ໃນໄລຍະ 1 ເດືອນຜ່ານມາ, ວຽກງານ ວິໄຈ ແລະ ປະເມີນຜົນ ໄດ້ຈັດຕັ້ງປະຕິບັດວຽກງານຂອງຕົນຕາມພາລະບົດບາດ ແລະ ການມອບໝາຍຂອງທີມງານ ບໍລິຫານງານ ທລຍ ສູນກາງ ໃນດ້ານວິຊາສະເພາະ ແລະ ດ້ານສັງຄົມດັ່ງນີ້:

ໄດ້ກວດກາ ແລະ ມີຄໍາເຫັນຕໍ່ບັນດາຮ່າງບົດລາຍງານເຄິ່ງໄລຍະການປະເມີນການສ້າງຄວາມເຂັ້ມແຂງໃຫ້ແກ່ອໍານາດການປົກຄອງທ້ອງຖິ່ນ ຂອງບໍລິສັດທີ່ປຶກສາ ມີໄຊເຕັກໂນ, ພ້ອມທັງໄດ້ສົ່ງບົດລາຍງານດັ່ງກ່າວໃຫ້ຜູ້ໃຫ້ທຶນເພື່ອຊາບ.

ສໍາເລັດການປັບປຸງຂໍ້ມູນຄວາມຄືບໜ້າ ຂອງບັນດາຕົວຊີ້ບອກຂອງໂຄງການ ທລຍ ໄລຍະ2 ເພື່ອນໍາສະເໜີຕໍ່ຜູ້ໃຫ້ທຶນ ແລະ ຄະນະປະເມີນຜົນກາງສະໄໝໂຄງການ, ພ້ອມທັງໄດ້ຄິດໄລ່ການໃຊ້ຈ່າຍງົບປະມານຂອງກຸ່ມບ້ານໃນໄລຍະກາງສະໄໝຂອງການຈັດຕັ້ງປະຕິບັດໂຄງການ ເພື່ອປະກອບເຂົ້າໃສ່ຮ່າງບົດລາຍງານເພື່ອການປະເມີນໄລຍະກາງສະໄໝໂຄງການຂອງທີມງານຜູ້ໃຫ້ທຶນ ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ່ 27 ມັງກອນ - 14 ກຸມພາ 2014.

ສໍາເລັດການຮ່າງພາລະບົດບາດ (ToR) ການປະເມີນຄວາມຍືນຍົງຂອງໂຄງການຢູ່ບັນດາແຂວງເປົ້າໝາຍເກົ່າຂອງ ທລຍ ເຊິ່ງໄດ້ສໍາເລັດການຈັດຈັ້ງປະຕິບັດໃນປີ 2008 (ເມືອງ ແອດ ແລະ ເມືອງສົບເບົາ ແຂວງ ຫົວພັນ, ເມືອງບາຈຽງ, ສຸຂຸມມາ, ມູນລະປະໂມກ, ປະທຸມພອນ ແລະ ເມືອງໂຂງ ແຂວງ ຈໍາປາສັກ) ພ້ອມທັງໄດ້ສົ່ງໃຫ້ຄະນະບໍລິຫານງານ ທລຍ ຂັ້ນສູນກາງເພື່ອມີຄໍາເຫັນ.

## *ງ. ພະແນກບໍລິຫານ-ການເງິນ*

### *ງ.1. ວຽກງານຈັດຕັ້ງ*

ກະກຽມຂໍ້ມູນສໍາລັບການມາປະເມີນໂຄງການກາງສະໄໝຂອງບັນດາຜູ້ໃຫ້ທຶນ: ໄດ້ສໍາເລັດການສະໜອງຂໍ້ມູນກ່ຽວກັບການປະເມີນຄັດເລືອກພະນັກງານໃຫ້ແກ່ທະນາຄານໂລກ, ປະຈຸບັນຍັງລໍຖ້າການລົງມາກວດກາລາຍລະອຽດຂອງເອກະສານທີ່ໄດ້ສະໜອງໃຫ້ແກ່ຜູ້ໃຫ້ທຶນ ເຊິ່ງຄາດຄະເນການລົງມາກວດກາເອກະສານຂອງຊ່ຽວຊານຈັດຊື້-ຈັດຈ້າງທະນາຄານໂລກແມ່ນ ອາທິດທີ 2 ຂອງເດືອນກຸມພາ 2014.

ກະກຽມກວດກາກ່ຽວກັບວຽກງານຈັດຕັ້ງຂອງໜ່ວຍງານກວດກາພາຍໃນ ທລຍ: ການຈັດຕັ້ງປະຕິບັດວຽກງານດັ່ງກ່າວຈະຈັດຂຶ້ນໃນເດືອນ ເມສາ 2014.

ສືບຕໍ່ດໍາເນີນການບັນຈຸ ແລະ ສັບຊ້ອນພະນັກງານໃນຕໍາແໜ່ງທີ່ຍັງຫວ່າງ: ໄດ້ສໍາເລັດການປະເມີນຄັດເລືອກເອົາພະນັກງານ ໃນຕໍາແໜ່ງດັ່ງລຸ່ມນີ້:

- ພະນັກງານເສີມສ້າງຄວາມເຂັ້ມແຂງສະຖາບັນທ້ອງຖິ່ນ ຢູ່ຂັ້ນສູນກາງ
- ວິຊາການປັບປຸງຊີວິດການເປັນຢູ່ ເມືອງນອງ, ແຂວງສະຫວັນນະເຂດ (LONG).
- ເລຂານຸການ ປະຈໍາ ທລຍ ແຂວງຫລວງພະບາງ
- ບໍລິຫານ-ການເງິນ ເມືອງໃໝ່, ແຂວງຜົ້ງສາລີ

ພ້ອມກັນນີ້ໄດ້ສໍາເລັດການສໍາເນົາ ແລະ ຈັດສົ່ງບົດປະເມີນຜົນຄວາມຮັບຜິດຊອບພະນັກງານ ທລຍ ທຸກໆຂັ້ນ ພ້ອມດຽວກັນກໍ່ໄດ້ຈັດສະບັບຕົ້ນເຂົ້າໄວ້ໃນເອກະສານງານສ່ວນບຸກຄົນຂອງພະນັກງານແຕ່ລະຄົນ ແລະ ໄດ້ສໍາ

ເລັດການທົບທວນພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງພະນັກງານປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນທາງດ້ານໂພສະນາການ ໂດຍອີງຕາມຄໍາເຫັນຂອງ ທ່ານ ນາງ ເຣເລັນ ເຣັກ ໃນອີເມລ ສະບັບລົງວັນທີ 23 ມັງກອນ 2014.

### ງ.2. ວຽກງານຈັດຊື້-ຈັດຈ້າງ

ຕິດຕາມການປະມູນສິນທຽບລາຄາການ ສ້ອມແປງຫ້ອງການ ທລຍ ເມືອງຂວາ, ຫ້ອງການ ທລຍ ແຂວງຂອງແຂວງ ຜົ້ງສາລີ ແລະ ຫ້ອງການ ທລຍ 5 ເມືອງຂອງຂອງແຂວງ ອຸດົມໄຊ ພ້ອມທັງ ຫ້ອງການ ທລຍ ແຂວງຂອງແຂວງ ອຸດົມໄຊ ທັງໝົດມີຄວາມຄືບໜ້າໄປ 90% ຊຶ່ງກໍາລັງຢູ່ໃນຂັ້ນຕອນການສະເໜີຂໍເບີກຈ່າຍ ແລະ ສໍາລັບການປະມູນຈັດຊື້ ສໍາລັບອຸປະກອນການແພດ ບ້ານລະໄກ, ເມືອງນອງ, ແຂວງສະຫວັນນະເຂດ ປັດຈຸບັນແມ່ນກໍາລັງລໍຖ້າການຈ່າຍເງິນ ເພາະເປັນໂຄງການທຶນສົມທົບຈາກລັດຖະບານ.

ພ້ອມກັນນີ້ໄດ້ດໍາເນີນຂັ້ນຕອນການປະມູນຈັດຊືເຄື່ອງເສີມກ້ອງຖ່າຍຮູບຂອງ ທລຍ ສູນກາງ ແລະ ການປະມູນຈັດຊື້ເຄື່ອງກະຈ່າຍຂໍ້ມູນຂ່າວສານ ຂອງພະແນກພັດທະນາຊຸມຊົນ ຈໍານວນ 4 ໜ່ວຍ ເຊິ່ງທັງ 2 ກິດຈະກໍານີ້ກໍາລັງຢູ່ໃນຂັ້ນຕອນການສະ ເໜີຂໍເບີກຈ່າຍ

ສໍາເລັດການປະມູນຕູ້ເຮັດນໍ້າຮ້ອນນໍ້າເຢັນຂອງຫ້ອງການ ທລຍ 5 ເມືອງ ແລະ ຫ້ອງການ ທລຍ ແຂວງຫລວງພະບາງ ພ້ອມທັງໄດ້ຕິດຕາມການປະມູນຈັດຊື້ເຟີນີເຈີ, ຕູ້ເຮັດນໍ້າຮ້ອນນໍ້າເຢັນ, ສ້ອມແປງຫ້ອງການ ທລຍເມືອງໄຊ ແຂວງອຸດົມໄຊ ແລະ ທລຍ ເມືອງຈອມເພັດ ແຂວງ ຫລວງພະບາງ ທັງ 3 ກິດຈະກໍານີ້ຄືບໜ້າໄປ 50% ປັດຈຸບັນພວມຢູ່ໃນຂັ້ນຕອນການຈັດສົ່ງສິນຄ້າ ແລະ ການປະຕິບັດສັນຍາ.

ຕິດຕາມການກໍ່ສ້າງຂົວອູ່ 3 ແຫ່ງ ຂອງເມືອງນາແລ ແລະ ເມືອງລອງ ແຂວງ ຫລວງນໍ້າທາ ແມ່ນມີຄວາມຄືບໜ້າໄປ 20% ປັດຈຸບັນພວມດໍາເນີນຂັ້ນຕອນການກໍ່ສ້າງຫາກຖານ ແລະ ສໍາລັບການກໍ່ສ້າງຝາຍນໍ້າລົ້ນ ແລະຂົວຈົມ ຢູ່ກຸ່ມບ້ານນາລໍາ ເມືອງໃໝ່ ແຂວງຜົ້ງສາລີ ປັດຈຸບັນພວມດໍາເນີນຂັ້ນຕອນການອານາໄມສະຖານທີ່ກໍ່ສ້າງແລະ ກໍ່ສ້າງຮາກຖານ.

ສໍາລັບກະກຽມການປະມູນເຄື່ອງໃຊ້ IT ສໍາລັບພະນັກງານໂຄງການ LONG ແມ່ນຄືບໜ້າໄປ 80% ປັດຈຸບັນກໍາລັງຢູ່ໃນຂັ້ນຕອນການສົ່ງເຄື່ອງ ແລະ ສະເໜີຂໍເບີກຈ່າຍ.

### ງ.3. ວຽກງານການເງິນ

ສໍາເລັດບົດລາຍງານການເງິນປະຈໍາເດືອນ ມັງກອນ 2014 ແລະ ສໍາເລັດການກ່ຽມເງິນໂຄງການ Japan Social Development Fund (JSDF) ປະຈໍາເດືອນ ມັງກອນ 2014 ພ້ອມນີ້ຍັງໄດ້ສໍາເລັດການເຮັດວຽກຮ່ວມກັບທີມງານຜູ້ກວດສອບການເງິນພາຍນອກໃນສົກປີ 2013.

ໄດ້ສໍາເລັດການກ່ຽມເງິນນໍາດັງເງິນບ້ວງໂຄງການຍ່ອຍຂອງແຂວງ ເຊກອງ, ອັດຕະປື, ຫລວງນໍ້າທາ, ແລະແຂວງ ຜົ້ງສາລີ ແລະ ສົ່ງບົດລາຍງານ IFR ໃຫ້ຜູ້ໃຫ້ທຶນ ປະຈໍາໄຕມາດ 10-12 ຂອງປີ 2013 ພ້ອມທັງສົ່ງແຈ້ງການຕ່າງໆ ທີ່ຕິດພັນກັບວຽກງານ ບໍລິຫານ - ການເງິນ ເຊັ່ນ: ເກັບກໍາສະຖິຕິໄລຍະທາງ, ການນໍາໃຊ້ແຈ້ງການເລກທີ 0008/ກງ, ການເປີດບັຊີໂຄງການຍ່ອຍສໍາລັບຂັ້ນບ້ານເປັນຕົ້ນ.

## VI. ແຜນດຳເນີນງານ ແຕ່ວັນທີ 01-28 ກຸມພາ 2014 ຂອງແຕ່ລະພະແນກ

### ກ. ພະແນກພັດທະນາຊຸມຊົນ

### ກ.1. ວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ

1. ກະກຽມແຜນການຈັດກອງປະຊຸມຖອດຖອນບົດຮຽນລະຫວ່າງກຸ່ມບ້ານຂອງແຕ່ລະແຂວງ ແລະ ທົບທວນຄືນວິທີການຈັດກອງປະຊຸມຖອດຖອນບົດຮຽນລະຫວ່າງກຸ່ມບ້ານຂອງແຕ່ລະແຂວງ.
2. ປະສານສົມທົບກັບພະແນກບໍລິຫານ-ການເງິນ ກ່ຽວກັບແຜນການຈັດຝຶກອົລຣົມວຽກງານການເງິນ ແລະ ວຽກງານການຈັດຊື້-ຈັດຈ້າງ ໃຫ້ກັບທີມງານຈັດຕັ້ງປະຕິບັດໂຄງການຂັ້ນບ້ານ.
3. ຕິດຕາມຜົນຂອງການຈັດກອງປະຊຸມ ແລະ ລາຍງານຄືນ ເພື່ອຮັບຮອງແຜນພັດທະນາກຸ່ມບ້ານຢູ່ຂັ້ນບ້ານ ພ້ອມທັງປະສານສົມທົບກັບພະແນກ ວິຊາການ ກ່ຽວກັບແຜນການຈັດຝຶກອົບຮົມການຈັດຕັ້ງປະຕິບັດໂຄງການຍ່ອຍໃຫ້ທີມງານຈັດຕັ້ງປະຕິບັດໂຄງການຂັ້ນບ້ານ.

### ກ.2 ວຽກງານກະຈາຍຂໍ້ມູນ - ຂ່າວສານ:

1. ສືບຕໍ່ລົງຂ່າວ ແລະ ກະຈາຍຂໍ້ມູນຂ່າວສານ ທາງ ເວັບໄຊຂອງ ທລຍ.
2. ສືບຕໍ່ສົມທົບກັບ ກົມຂ່າວສານ ສະຫະພັນແມ່ຍິງ ຜະລິດສະປອດໂຄສະນາ ກ່ຽວກັບການສົ່ງເສີມບົດບາດຍິງ-ຊາຍ ໃນການພັດທະນາຊົນນະບົດ ພາຍໃຕ້ວຽກງານ ທລຍ.
3. ສົມທົບກັບ ໂທລະພາບແຫ່ງຊາດເພື່ອ ແປ ແລະ ຜະລິດສະປອດໂຄສະນາ ແນະນຳໂຄງການ ທລຍ ແລະ ສະປອດໂຄສະນາກ່ຽວກັບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ເປັນພາສາມົ້ງ ແລະ ກຶ່ມມຸ.
4. ສົມທົບກັບໂທລະພາບແຫ່ງຊາດໃນການຜະລິດຟີມສາລະຄະດີກ່ຽວກັບການແກ້ໄຂຄວາມທຸກຍາກໃນລະດັບຄອບຄົວ ຜ່ານກິດຈະປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນທາງດ້ານໂພຊະນາການ.
5. ສົ່ງຂ່າວສານກ່ຽວກັບວຽກງານຂອງ ທລຍ ໃຫ້ວິທະຍຸແຫ່ງຊາດ, ກົມຂ່າວສານແມ່ຍິງລາວ ແລະ ໜັງສືພິມຕ່າງໆເພື່ອອອກຂ່າວໃຫ້ໄດ້ 10 ຂ່າວ.
6. ສືບຕໍ່ເຂົ້າຮ່ວມ ລາຍການລຸງສ້າງ-ລຸງສາ ພາຍໃຕ້ຫົວຂໍ້ວິທີການຈັດຊື້-ຈັດຈ້າງ ໂຄງການຍ່ອຍ ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ ສຳລັບຮອບວຽນທີ 11.
7. ສືບຕໍ່ປະສານສົມທົບ ກັບພະແນກວິສະວະກຳ ແລະ ພະແນກບໍລິຫານ-ການເງິນ ເພື່ອກະກຽມຜະລິດຟີມສາລະຄະດີກ່ຽວກັບຂະບວນການຈັດຊື້-ຈັດຈ້າງ ຂອງຊຸມຊົນ, ສາລະຄະດີຄວາມຮູ້ກ່ຽວກັບການກໍ່ສ້າງອາຄານ ແລະ ລະບົບນ້ຳສະອາດ ເພື່ອກະຈາຍຂໍ້ມູນຂ່າວສານໃຫ້ແກ່ຊຸມຊົນໃນເຂດເປົ້າໝາຍຂອງ ທລຍ.
8. ກະກຽມຈັດພິມປຶ້ມຄູ່ມື, ແຜ່ນພັບ ກສກ, ປຶ້ມຄູ່ມື 4 ນະໂຍບາຍ ແລະ ໃບປິວ 4 ນະໂຍບາຍ ຮ່ວມກັບພະແນກບໍລິຫານ-ການເງິນ ແລະ ໜ່ວຍງານຈັດຊື້-ຈັດຈ້າງ.
9. ປະສານສົມທົບກັບ ພະແນກຕິດຕາມປະເມີນຜົນ ເພື່ອຜະລິດແຜນທີ່ແຂວງ ແລະ ເມືອງເປົ້າໝາຍ ທລຍ ເປັນພາສາລາວ.

### ກ.3 ວຽກງານບົດບາດຍິງ - ຊາຍ ແລະ ກຸ່ມຜູ້ດ້ອຍໂອກາດ

1. ສະຫລຸບຜົນການຈັດຝຶກອົບຮົມ ແລະ ຜົນຂອງການຄົ້ນຄ້ວາເປັນກຸ່ມກ່ຽວກັບໜ້າວຽກທີ່ຕ້ອງການປັບປຸງກ່ຽວກັບ ສິດສະເໝີພາບ ລະຫວ່າງຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ.

2. ປະສານກັບໜ່ວຍງານ IEC ເພື່ອຜະລິດ ແລະ ແຈກຢາຍ ສະປອດໂຄສະນາກ່ຽວກັບວຽກງານ GESI, ຜະລິດ VOD CD ກ່ຽວກັບຄວາມຮຸນແຮງທີ່ມີຕໍ່ແມ່ຍິງໃນຄອບ ສໍາລັບແຈກຢາຍໃຫ້ພະນັກງານ ແລະ ຂະແໜງການທີ່ກ່ຽວຂ້ອງໃນຂັ້ນເມືອງ ແລະ ຂັ້ນແຂວງ.
3. ສ້າງແຜນວຽກຕິດຕາມການມີສ່ວນຮ່ວມຂອງແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດ ໃນການຈັດຕັ້ງກິດຈະກໍາຕ່າງໆ ຂອງ ທລຍ ໃນຮອບວຽນ 12 ສົກປີ 2013-2014 ແລະ ປະສານກັບໜ່ວຍງານ ITC ເພື່ອປັບປຸງຂໍ້ມູນກ່ຽວກັບ GESI ໃນໜ້າ ທລຍ ເວບໄຊ້.

## *ຂ. ພະແນກວິສະວະກໍາ*

1. ຈັດສັນງົບປະມານກໍ່ສ້າງໂຄງການຍ່ອຍຂອງແຂວງ ເຊກອງ, ສະຫວັນນະເຂດ ແລະ ແຂວງ ຫົວພັນ.
2. ສົ່ງບົດສະເໜີຂໍອະນຸມັດຂໍອະນຸມັດງົບປະມານການທັດສະນະສຶກສາໃຫ້ທະນາຄານໂລກຂອງໂຄງການ (ຄປຄສ-LUFSIP).
3. ຕິດຕາມການຝຶກອົບຮົມກ່ອນການຈັດຕັ້ງປະຕິບັດໂຄງການຍ່ອຍໃນທຸກແຂວງ.
4. ສັງລວມງົບປະມານໂຄງການຍ່ອຍບ້ວທຶນສົມທົບລັດຖະບານ ແລະ ສ້າງແຜນສໍາຫລວດຮອບວຽນທີ 12.
5. ປຶກສາຫາລື ແລະ ຂໍຄໍາເຫັນຮ່ວມກັບກະຊວງສາທາລະນະສຸກກ່ຽວກັບແບບແປນຂອງສຸກສາລາ.

## *ຄ. ພະແນກຕິດຕາມ-ປະເມີນຜົນ*

### *ຄ.1. ວຽກງານແຜນທີ່*

1. ກະກຽມແຜນທີ່ ທລຍ 1 ແລະ 2 ພາກພາສາລາວ ເພື່ອພິມໃຫ້ ແຂວງ ແລະ ເມືອງຕ່າງໆ ຂອງ ທລຍ.
2. ກະກຽມ ຈັດຝຶກອົບຮົມ ການສ້າງແຜນທີ່ ຂັ້ນບ້ານ ໃຫ້ແກ່ ພະນັກງານໜ່ວຍງານ ຕິດຕາມປະເມີນຜົນທັງ 10 ແຂວງ ທລຍ 24-28 ກຸມພາ 2014.
3. ປັບປຸງຂໍ້ມູນແຜນທີ່, ບົດລາຍງານປະຈໍາເດືອນ ແລະ ປະຈໍາປີ ທລຍ ຂຶ້ນເວບໄຊ້ ທລຍ ແລະ ສືບຕໍ່ສ້າງແຜນທີ່ ຮອບວຽນ 11 ຂອງ ທລຍ ທັງ 10 ແຂວງ.

### *ຄ.2. ວຽກງານການລາຍງານ*

1. ສັງລວມ ແລະ ສຶກສາຂໍ້ມູນ ຮອບວຽນ 11 ແລະ ຊ່ວຍໃນການກວດສອບຄວາມຖືກຕ້ອງຂອງຂໍ້ມູນໃນລະບົບຖານຂໍ້ມູນເພື່ອຮັບປະກັນຄວາມຖືກຕ້ອງຂອງຂໍ້ມູນ.
2. ປັບປຸງແບບຟອມການລາຍງານປະຈໍາເດືອນ, ປະຈໍາໄຕມາດ, ປະຈໍາປີ ເພື່ອແຈກຢາຍໃຫ້ແຕ່ລະຂັ້ນ.

### *ຄ.3. ວຽກງານ ກສກ (ກົນໄກສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ)*

1. ຕິດຕາມ ແລະ ຕອບຮັບ ຄໍາຄິດເຫັນຜ່ານທາງອີເມລ, ສາຍດ່ວນ 161 ແລະ ການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວຽກງານ ກສກ ໃນ 10 ແຂວງເປົ້າໝາຍຂອງ ທລຍ.
2. ສະຫຼຸບ ແລະ ເຮັດບົດລາຍງານລວມ ຄວາມຄືບໜ້າຂອງໜ້າວຽກ ກສກ ປະຈໍາເດືອນ ກຸມພາ 2014 ສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ.
3. ກະກຽມບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ ປະຈໍາເດືອນ ກຸມພາ 2014.

### ຄ.4. *ວຽກງານລະບົບຄຸ້ມຄອງຂໍ້ມູນຂ່າວສານ (MIS)*

1. ສືບຕໍ່ສັງລວມຂໍ້ມູນ ກອງປະຊຸມການວາງແຜນພັດທະນາຂັ້ນບ້ານ, ກອງປະຊຸມຂັ້ນຕ່າງໆ ແລະ ການຝຶກອົບຮົມຕ່າງໆ.
2. ສືບຕໍ່ໃຫ້ຄວາມສະດວກ ແລະການຊ່ວຍເຫລືອແກ່ ພະນັກງານ ໃນຂັ້ນແຂວງ ເພື່ອຕິດຕາມເອົາຂໍ້ມູນທີ່ຍັງບໍ່ຄົບມາຕື່ມໃສ່ໃນລະບົບຖານຂໍ້ມູນໃຫ້ຖືກຕ້ອງ ແລະ ຄົບຖ້ວນ ແລະ ສືບຕໍ່ພົວພັນບໍລິສັດທີ່ປຶກສາ APIS ເພື່ອບໍາລຸງຮັກສາ ແລະ ພັດທະນາລະບົບຖານຂໍ້ມູນ ເພື່ອຮັບໃຊ້ວຽກງານ ທລຍ ໃຫ້ມີຄວາມສະດວກໃນຕໍ່ໜ້າ.

### ຄ.5. *ວຽກງານວິໄຈ ແລະ ປະເມີນຜົນ*

1. ສືບຕໍ່ນໍາເອົາບົດລາຍງານສຸດທ້າຍການປະເມີນການສ້າງຄວາມເຂັ້ມແຂງໃຫ້ແກ່ອໍານາດການປົກຄອງທ້ອງຖິ່ນຂອງຂອງບໍລິສັດທີ່ປຶກສາ ມີໄຊເຕັກໂນ.
2. ກະກຽມເຄື່ອງມືເພື່ອການປະເມີນຄວາມຍືນຍົງຂອງໂຄງການຢູ່ບັນດາແຂວງເປົ້າໝາຍເກົ່າຂອງ ທລຍ ເຊິ່ງໄດ້ສໍາເລັດການຈັດຈັ້ງປະຕິບັດໃນປີ 2008 (ເມືອງ ແອດ ແລະ ເມືອງສົບເບົາ ແຂວງຫົວພັນ, ເມືອງບາຈຽງ, ສຸຂຸມມາ, ມູນລະປະໂມກ, ປະທຸມພອນ ແລະ ເມືອງໂຂງ ແຂວງ ຈໍາປາສັກ) ເຊິ່ງຄາດວ່າຈະສາມາດດໍາເນີນການໄດ້ໃນເດືອນ ເມສາ 2014 ທີ່ຈະມາເຖິງນີ້.
3. ສັງລວມ ແລະ ວິໄຈ ແຜນການຈັດຕັ້ງປະຕິບັດວຽກງານ ທລຍ ໃນສົກປີ 2013-2014.
4. ສັງລວມແຜນການລົງທຶນຂອງ ທລຍ ໃນບ້ວງທຶນສົມທົບຂອງລັດຖະບານ ສົກປີ 2014-2015.

## ງ. *ພະແນກບໍລິຫານ-ການເງິນ*

### ງ.1. *ວຽກງານຈັດຕັ້ງ*

1. ພະແນກບໍລິຫານ-ການເງິນ ກະກຽມຂໍ້ມູນກ່ຽວກັບການໃຊ້ງົບປະມານບໍລິຫານ (ການຈັດກອງປະຊຸມ, ຝຶກອົບຮົມ ແລະ ການໃຊ້ນໍ້າມັນລົດຕໍ່ຫລັກກິໂລແມັດ) ຢູ່ແຕ່ລະຂັ້ນ ເພື່ອສະເໜີເປັນທາງການຕໍ່ຜູ້ໃຫ້ທຶນ
2. ກະກຽມການເຮັດຄູ່ມື ແລະ ລະບຽບກ່ຽວກັບການຈັດຕັ້ງ
3. ກະກຽມແບບຟອມການເຮັດບົດລາຍງານປະຈໍາເດືອນ ກ່ຽວກັບວຽກງານຈັດຕັ້ງ
4. ສືບຕໍ່ປະກາດ ແລະ ປະເມີນການຄັດເລືອກເອົາພະນັກງານໃນຕໍາແໜ່ງຕໍ່ໄປນີ້:
    - ບໍລິຫານ-ການເງິນ ເມືອງເຊໂປນ, ແຂວງ ສະຫວນນະເຂດ.
    - ປະສານງານຂັ້ນບ້ານ ປະຈໍາ LONG ເມືອງເຊໂປນ, ແຂວງ ສະຫວັນນະເຂດ.
    - ບໍລິຫານ-ການເງິນ ເມືອງປາກແຊງ ແລະ ນໍ້າບາກ ເມືອງລະ 01 ຕໍາແໜ່ງ, ແຂວງ ຫລວງພະບາງ.
    - ປະສານງານເມືອງວຽງທອງ (LONG) ແຂວງຫົວພັນ.

### ງ.2. *ວຽກງານຈັດຊື້-ຈັດຈ້າງ*

1. ຕິດຕາມການຈັດສົ່ງ ຄອມພິວເຕີແບບພົກພາ, ໂປຣເຈັກເຕີ, ລໍາໂພງ ແລະ ກ້ອງຖ່າຍຮູບ ໂຄງການ LONG ແລະ ສືບຕໍ່ກະກຽມມາດຕະຖານເຕັກນິກ ແລະ ດໍາເນີນການຈັດຊື້ຈັກປັ່ນໄຟຟ້າໃຫ້ 5 ເມືອງ ໂຄງການ LONG.

2. ກວດກາເອກະສານ ແລະ ດຳເນີນຂັ້ນຕອນການເບີກຈ່າຍ ສຳລັບການສ້ອມແປງຫ້ອງການ ທລຍ ເມືອງຂວາ ແລະ ຫ້ອງການ ທລຍ ແຂວງ ຂອງແຂວງ ຜົ້ງສາລີ.
3. ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດການກໍ່ສ້າງຂົວອູ່ 3 ແຫ່ງ ຂອງເມືອງລອງ ແລະ ເມືອງນາແລ ແຂວງຫລວງນ້ຳທາ.
4. ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດການກໍ່ສ້າງຝາຍນ້ຳລົ້ນ ແລະ ຂົວຈົມບ້ານນາລຳ ເມືອງໃໝ່ ແຂວງ ຜົ້ງສາລີ.
5. ກວດກາມາດຕະຖານເຕັກນິກ, ຈຳນວນ, ຄວາມຖືກຕ້ອງ ແລະ ສະເໜີຂໍເບີກຈ່າຍສຳລັບອຸປະກອນເສີມກ້ອງຖ່າຍຮູບຂອງພະແນກພັດທະນາຊຸມຊົນ ຫ້ອງການ ທລຍ ສູນກາງ.
6. ກວດກາມາດຕະຖານເຕັກນິກ, ຈຳນວນ, ຄວາມຖືກຕ້ອງ ແລະ ສະເໜີຂໍເບີກຈ່າຍ ສຳລັບການຈັດພິມເຄື່ອງກະຈາຍຂໍ້ມູນຂ່າວສານ ຂອງພະແນກພັດທະນາຊຸມຊົນ.
7. ຕິດຕາມຈັດສິ່ງສິນຄ້າ ແລະ ປະຕິບັດສັນຍາ ສຳລັບຈັດຊື້ເຟີນິເຈີ, ຕູ້ເຮັດນ້ຳຮ້ອນນ້ຳເຢັນ, ສ້ອມແປງຫ້ອງການ ທລຍ ເມືອງໄຊ ແຂວງ ອຸດົມໄຊ.
8. ຕິດຕາມຈັດສິ່ງສິນຄ້າ ແລະ ປະຕິບັດສັນຍາ ຈັດຊື້ເຟີນິເຈີ, ຕູ້ເຮັດນ້ຳຮ້ອນນ້ຳເຢັນ, ສ້ອມແປງຫ້ອງການ ທລຍ ເມືອງຈອມເພັດ ແຂວງ ຫລວງພະບາງ.
9. ກວດກາເອກະສານການສ້ອມແປງຫ້ອງການ ທລຍ ເມືອງ ແລະ ແຂວງ ຕ່າງໆ ໄດ້ທີ່ອະນຸມັດ ແລ້ວດຳເນີນຂັ້ນຕອນການຂໍເບີກຈ່າຍ.
10. ກະກຽມບົດບັນທຶກການເປີດຊອງປະມູນ, ບົດປະເມີນຜົນ, ບົດຕັດສິນ, ສັນຍາ ແລະ ໃບສັ່ງຊື້ກ່ຽວກັບການຜະລິດແຜ່ນໂຄສະນາການຈັດຕັ້ງປະຕິບັດວຽກງານ ທລຍ ຮອບວຽນ 11.
11. ກະກຽມເອກະສານສັນຍາກ່ຽວກັບການວ່າຈ້າງບໍລິສັດອິນໂດໄຊນາ ວຽກງານ Base Line survey ຂອງໂຄງການ LONG.
12. ຕິດຕາມການຈັດຝຶກອົບຮົມວຽກງານຈັດຊື້-ຈັດຈ້າງໃຫ້ກັບທີມງານຈັດຕັ້ງປະຕິບັດຂັ້ນບ້ານ ໂຄງການຍ່ອຍຮອບວຽນ 11.
13. ສັງລວມແຜນຈັດຊື້ໂຄງການຍ່ອຍຮອບວຽນທີ 11 ສົ່ງໃຫ້ທະນາຄານໂລກ.

### ງ.3. *ວຽກງານການເງິນ*

1. ເຮັດບົດລາຍງານການເງິນປະຈຳເດືອນ ມັງກອນ 2014.
2. ເຮັດໃບສະເໜີຂໍຖອນເງິນ ຂອງ JSDF, ໂຄງການ LONG ປະຈຳເດືອນ ມັງກອນ 2014.
3. ກະກຽມການຖອນເງິນ ປະຈຳເດືອນ ມັງກອນ 2014.
4. ກະກຽມການຖ່ວງເງິນໂຄງການຍ່ອຍຂອງແຂວງ ອຸດົມໄຊ ປະຈຳຮອບວຽນ 10.
5. ເຮັດວຽກຮ່ວມກັບທີມງານການເງິນຂອງທີມງານທະນາຄານໂລກ.

ວັນທີ 14 ມັງກອນ 2013

| ຮັບຮູ້ ແລະ ເຫັນພ້ອມຈາກ<br>ຜູ້ອຳນວຍການບໍລິຫານ ທລຍ | ຢັ້ງຢືນໂດຍຫົວໜ້າພະແນກ<br>ຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
| --- | --- | --- |
| ------------------------ | ------------------------ | -------------------- |
| ບຸນກວ້າງ ສຸວັນນະພັນ | ສີວິໄລ ວໍລະຈັກ | ມະນີວັນ ອິນທະປັນຍາ |

# ເອກະສານຊ້ອນທ້າຍ

ລາຍຊື່ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດ

| ລ/ດ | ແຂວງ | ເມືອງ | ຊື່ໂຄງການ | ກຸ່ມ | ບ້ານ | ເຫດຜົນທີ່ໃຈະ |
|---|---|---|---|---|---|---|
| 1 | ສາລະວັນ | | ໂຄງການກໍ່ສ້າງຊີມລະປະທານ | ດູບ | ປະເຕມ | ງົບປະມານບໍ່ພຽງພໍ |
| 2 | ຫົວພັນ | ວຽງທອງ | ທໍ່ເອົານ້ຳໃສ່ນາ | ຖ້ຳລາ | ຖ້ຳລາເໜືອ | ງົບປະມານເກີນເພດານຂອງກຸ່ມ |
| 3 | ຫົວພັນ | ຊຳເໜືອ | ກໍ່ສ້າງນ້ຳລິນ | ໄພນທອງ | ປ່າຈ້າ | ລຳທູດບໍ່ຜ່ານ ນ້ຳບໍ່ຂຶ້ນບ້ານ |
| 4 | ຫົວພັນ | ຊຽງຄໍ້ | ຝາຍນ້ຳລົ້ນ | ສົບມອນ | ບ.ນາວຽງ | ງົບປະມານເກີນເພດານກຸ່ມ |
| 5 | ຫົວພັນ | ຊຽງຄໍ້ | ຝາຍນ້ຳລົ້ນ | ສົບຊາຍ | ບ. ຕົ້ງຊາຍ | ຊຸມຊົນບໍ່ສາມາດຈັດຕັ້ງປະຕິບັດໄດ້(ມີບົດບັນທຶກ) |
| 6 | ຊຽງຂວາງ | ຄູນ | 2. ຫ້ອງນ້ຳໂຮງຮຽນ | ກຸ່ມບ້ານ ແກ່ວແສດ | ພັກຊິ້ງ | ບໍ່ໄດ້ຖືກຍົກເລີກ, ໂຄງການດັ່ງກ່າວຖືກນຳໄປຈັດຕັ້ງປະຕິບັດຢູ່ຮອບວຽນທີ່ 11 |
| 7 | ຊຽງຂວາງ | ຄູນ | 3. ຫ້ອງນ້ຳໂຮງຮຽນ | ກຸ່ມບ້ານ ແກ່ວແສດ | ຕົບໃຕ້ ແລະ ຕົບເໜືອ | ບໍ່ໄດ້ຖືກຍົກເລີກ, ໂຄງການດັ່ງກ່າວຖືກນຳໄປຈັດຕັ້ງປະຕິບັດຢູ່ຮອບວຽນທີ່ 11 |
| 8 | ຊຽງຂວາງ | ທ່າໂທມ | ວາງທໍ່ນ້ຳລິນ | ກຸ່ມບ້ານທ່າວຽງ | ບູ້ | ໂຄງການດັ່ງກ່າວຖືກຜົນກະທົບຈາກການສ້າງເຂື່ອນໄຟຟ້າ ແລະ ບ້ານດັ່ງກ່າວຕ້ອງໄດ້ຖືກຍົກຍ້າຍ |
| 9 | ຊຽງຂວາງ | ທ່າໂທມ | ສົມທົບສ້າງຂົວອູ່ | ກຸ່ມບ້ານນາມຈະເລີນ | ພຽງລະຫວາດ | ໂຄງການດັ່ງກ່າວເປັນແຜນຂອງລັດຖະບານທີ່ຈະກໍ່ສ້າງ ເນື່ອງຈາກເຂດດັ່ງກ່າວເປັນຈຸດສຸມຂອງລັດຖະບານ |
| 10 | ເຊກອງ | ລະມາມ | ກໍ່ສ້າງຄອງຊີມລະປະທານ | ກຸ່ມບ້ານກະຊັງການ(4) | ບ. ປະອໍ | ງົບປະມານເກີນງົບປະມານຂອງກຸ່ມບ້ານ |
| 11 | ເຊກອງ | ກະລືມ | ກໍ່ສ້າງອ່າງນ້ຳລິນ | ສອງຄອນ | ຈອກ | ລຳທູດບໍ່ໄດ້ຍ້ອນທີ່ຕັ້ງບ້ານບ້ານສູງກວ່າບໍ່ນ້ຳ |
| 12 | ເຊກອງ | ກະລືມ | ກໍ່ສ້າງນ້ຳລິນ | ອາເຣາະ | ຊວງ | ບໍ່ມີເສັ້ນທາງເຂົ້າຮອດບ້ານ |
| 13 | ເຊກອງ | ກະລືມ | ກໍ່ສ້າງນ້ຳລິນ | ປະນອນ | ໂງ | ງົບປະມານເກີນງົບປະມານຂອງກຸ່ມບ້ານ |
| 14 | ສະວັນນະເຂດ | ນອງ | ກໍ່ສ້າງຂົວຈິມ ແລະ ວາງທໍ່ | 6 | ປະລຽງເກົ່າ | ຖືກແຜນເລັ່ງລັດຂອງລັດຖະບານກໍ່ສ້າງແລ້ວ |
| 15 | ສະວັນນະເຂດ | ເຊໂປນ | ສ້ອມແປງນ້ຳລິນ | 7 | ສະເວດ | ໂຄງການອື່ນສ້ອມແປງແລ້ວ |
| 16 | ສະວັນນະເຂດ | ເຊໂປນ | ຖັງປາປະຈຳບ້ານ | 7 | ວັງໄຮ | ງົບປະມານກຸ່ມບໍ່ພຽງພໍ |
| 17 | ສະວັນນະເຂດ | ເຊໂປນ | ກໍ່ສ້າງນ້ຳລິນ | 9 | ໃໝ່ | ງົບປະມານກຸ່ມບໍ່ພຽງພໍ |
| 18 | ສະວັນນະເຂດ | ເຊໂປນ | ຖັງປາປະຈຳບ້ານ | 10 | ລະອານ | ງົບປະມານກຸ່ມບໍ່ພຽງພໍ |
| 19 | ສະວັນນະເຂດ | ເຊໂປນ | ກໍ່ສ້າງນ້ຳລິນ | 10 | ຕະເປີອ | ງົບປະມານກຸ່ມບໍ່ພຽງພໍ |
| 20 | ຜົ້ງສາລີ | ເມືອງໃໝ່ | ສ້ອມແປງນ້ຳລິນ | ກຸ່ມ ໄພນໄຊ | ຂາຈີ | ໂຄງການ NODC ເອົາໄປເຮັດ |
| 21 | ອຸດົມໄຊ | ເມືອງງາ | ເພີ່ມອ່າງເກັບນ້ຳ + ວາງທໍ່ນ້ຳລິນ | ດອນແອັດ | ເມືອງງາ | ມີນ້ຳປະປາຊຸມຊົນ |
| 22 | ອຸດົມໄຊ | ເມືອງງາ | ກໍ່ສ້າງລະບົບນ້ຳລິນ | ດອນແອັດ | ດອນແອ່ນ | ມີນ້ຳປະປາຊຸມຊົນ |
| 23 | ອຸດົມໄຊ | ເມືອງງາ | ສ້ອມແປງນ້ຳລິນ | ຫ້ວຍລ້ອມ | ບໍ່ອໄຮ | ມີນ້ຳປະປາຊຸມຊົນ |
| 24 | ອຸດົມໄຊ | ເມືອງນາໝໍ້ | ສ້ອມແປງທາງເຂົ້າບ້ານ | ວັງອ່າງ | ມີກຄະ | ເປັນໄປບໍ່ໄດ້ ເພາະມີດິນຕັດຫຼາຍ, ງົບບໍ່ພຽງພໍ |
| 25 | ອຸດົມໄຊ | ເມືອງນາໝໍ້ | ກໍ່ສ້າງຝາຍເບຕົງເສີມເຫຼັກ | ວັງອ່າງ | ນ້ຳທອງ | ຜູ້ໄດ້ຮັບຜົນປະໂຫຍດໜ້ອຍ, ເນື້ອທີ່ທຳການຜະລິດໜ້ອຍ |
| 26 | ອຸດົມໄຊ | ເມືອງນາໝໍ້ | ສະໜອງໂຕະ, ຕັ່ງນັກຮຽນ (ສຳຮອງ) | ພູປາດ | ພູປາດ | ງົບບໍ່ພຽງພໍໃນປີນີ້ |
| 27 | ອຸດົມໄຊ | ເມືອງນາໝໍ້ | ວາງທໍ່ນ້ຳລິນ | ພູເຄືອ | ພູເຄືອ | ງົບບໍ່ພຽງພໍໃນປີນີ້ |
| 28 | ອຸດົມໄຊ | ເມືອງນາໝໍ້ | ວາງທໍ່ເອົານ້ຳເຂົ້ານາ | ພູເຄືອ | ຫ້ວຍຊຸ | ງົບບໍ່ພຽງພໍໃນປີນີ້ |
| 29 | ອຸດົມໄຊ | ເມືອງນາໝໍ້ | ສ້ອມແປງທາງເຂົ້າບ້ານ | ປາງສາ | ຫ້ວຍທົກ | ພາກລັດມີແຜນກໍ່ສ້າງທາງ |

| | | | | | | |
|---|---|---|---|---|---|---|
| 30 | ອຸດົມໄຊ | ເມືອງແບງ | ຈັດສັນບ່ອນລັງລັດ | ຂ້ອນ | ຕີງທຸນ | ໂຄງການບໍ່ສະໜັບສະໜູນ ແລະ ປະຊາຊົນບໍ່ມີບໍລິສັດ |
| 31 | ອຸດົມໄຊ | ເມືອງແບງ | ສ້ອມແປງທາງໄປເຂດທຳການຜະລິດ | ນ້ຳຂອງ | ມີກວງງ | ປະຊາຊົນຢາກໄດ້ທາງຍົກລະດັບ ເຮັດໃຫ້ເງິນບໍ່ພຽງພໍ |
| 32 | ອຸດົມໄຊ | ເມືອງແບງ | ສ້າງຊົນລະປະທານ | ຕ່າງດູ | ບົງ | ບໍ່ເໝາະສົມຍ້ອຍຜູ້ໄດ້ຮັບຜົນປະໂຫຍດໜ້ອຍ |
| 33 | ອຸດົມໄຊ | ເມືອງແບງ | ສ້ອມແປງລະບົບນ້ຳລິນ | ຕ່າງດູ | ປ້ອມ | ງົບປະມານບໍ່ພຽງພໍ |
| 34 | ອຸດົມໄຊ | ເມືອງແບງ | ກໍ່ສ້າງລະບົບນ້ຳລິນ | ກໍ່າ | ກັນວາງ | ລຳຫລອດບໍ່ຜ່ານ |
| 35 | ອຸດົມໄຊ | ເມືອງແບງ | ສ້ອມແປງລະບົບນ້ຳລິນ | ກໍ່າ | ກໍ່າ | ລຳຫລອດບໍ່ຜ່ານ |
| 36 | ອຸດົມໄຊ | ເມືອງຮຸນ | ສ້ອມແປງທາງເຂົ້າຫາບ້ານ | ນາງວາງ | ລ່ອງຍິນ | ລັດມີແຜນຍົກຍ້າຍບ້ານ |
| 37 | ອຸດົມໄຊ | ເມືອງຮຸນ | ສ້ອມແປງທາງເຂົ້າຫາບ້ານ | ນາງວາງ | ດອນແກ້ວ | ລັດມີແຜນຍົກຍ້າຍບ້ານ |
| 38 | ອຸດົມໄຊ | ເມືອງຮຸນ | ສ້ອມແປງທາງເຂົ້າຫາບ້ານ | ນາງວາງ | ນາວາງ | ລັດມີແຜນຍົກຍ້າຍບ້ານ |
| 39 | ອຸດົມໄຊ | ເມືອງຮຸນ | ສ້ອມແປງທາງເຂົ້າຫາບ້ານ | ນາຊຽງດີ | ມີກຈາກ | ລັດມີແຜນກໍ່ສ້າງ |
| 40 | ອຸດົມໄຊ | ເມືອງຮຸນ | ສ້ອມແປງທາງເຂົ້າຫາບ້ານ | ຫ້ວຍທີກ | ແຈ້ງ | ງົບປະມານບໍ່ພຽງພໍ |
| 41 | ອຸດົມໄຊ | ເມືອງຮຸນ | ກໍ່ສ້າງລະບົບນ້ຳລິນ | ຫ້ວຍທີກ | ພູທອງ | ລຳຫລອດບໍ່ຜ່ານ |
| 42 | ອຸດົມໄຊ | ເມືອງຮຸນ | ສ້າງທາງເຂົ້າຫາບ້ານ | ຫ້ວຍທີກ | ຫ້ວຍທີກ | ບໍ່ເໝາະສົມເພາະທາງຕັດຜ່ານບ້ານຖືກດິນປະຊາຊົນ |
| 43 | ອຸດົມໄຊ | ເມືອງຮຸນ | ກໍ່ສ້າງລະບົບນ້ຳລິນ | ນາເງິນ | ເພຍເລັງ | ລຳຫລອດບໍ່ຜ່ານ |
| 44 | ອຸດົມໄຊ | ເມືອງຮຸນ | ຕູ້ຢາປະຈຳບ້ານ | ນາເງິນ | ມີກໄປ | ລັດມີແຜນປັບປຸງ |
| 45 | ອຸດົມໄຊ | ເມືອງຮຸນ | ສ້າງຫ້ອງານນ້ຳລິນ | ນ້ຳພູນ | ພູເລົາ | ງົບປະມານບໍ່ພຽງພໍ |
| 46 | ອຸດົມໄຊ | ເມືອງຮຸນ | ສ້າງທາງໄປເຂດທຳການຜະລິດ | ນ້ຳພູນ | ຈັນວາງ | ໂຄງການບໍ່ສະໜັບສະໜູນສ້າງທາງໃຫຍ່ |
| 47 | ອຸດົມໄຊ | ເມືອງຮຸນ | ກໍ່ສ້າງຝາຍເບຕົງເສີມເຫຼັກ | ຈັນໄຕ | ນ້ຳຄໍ | ງົບປະມານບໍ່ພຽງພໍ |
| 48 | ອຸດົມໄຊ | ເມືອງຮຸນ | ກໍ່ສ້າງຂຶວນ້ຳລົ້ນ | ສີບຸນເຮືອງ | ນ້ຳນ້ອຍ | ງົບປະມານບໍ່ພຽງພໍ |
| 49 | ອຸດົມໄຊ | ເມືອງຮຸນ | ກໍ່ສ້າງຝາຍ (ລຳຮອງ) | ສີບຸນເຮືອງ | ຫົວນ້ຳມາວ | ຫ້ອງານໃຫຍ່, ບໍ່ທັນບຸກເບີກເນື້ອທີ່ນາ, ມີແຜນຍ້າຍບ້ານ |
| 50 | ອຸດົມໄຊ | ເມືອງຮຸນ | ສ້າງທາງໄປເຂດທຳການຜະລິດ | ສິມໄຊ | ນາ | ໂຄງການບໍ່ສະໜັບສະໜູນສ້າງທາງໃຫຍ່ |
| 51 | ອຸດົມໄຊ | ເມືອງຮຸນ | ສ້ອມແປງທາງເຂົ້າບ້ານ | ພູວຽງໄຊ | ມີກຖະ | ບໍລິສັດຈາກພາຍນອກສ້ອມແປງສຳເລັດແລ້ວ |
| 52 | ອຸດົມໄຊ | ເມືອງຮຸນ | ສ້າງຝາຍເກັບນ້ຳຂະໜາດນ້ອຍ | ພູວຽງໄຊ | ກອນໄຕງ | ໄດ້ຮັບໂຄງການສ້າງທາງແລ້ວ |
| 53 | ອຸດົມໄຊ | ເມືອງປາກແບງ | ທະລຸເສັ້ນທາງ | ຄຳ | ຫ້ວຍກະ | ງົບບໍ່ພຽງພໍໃນປີນີ້ |
| 54 | ອຸດົມໄຊ | ເມືອງປາກແບງ | ສ້ອມແປງນ້ຳລິນ (ເສີມອ່າງເກັບນ້ຳ) | ຄຳ | ຄຳ | ງົບບໍ່ພຽງພໍໃນປີນີ້ |
| 55 | ອຸດົມໄຊ | ເມືອງປາກແບງ | ຕຳລາຮຽນ/ອຸປະກອນການຮຽນ | ພູຫຼວງ | ຈອມຊາງ | ງົບບໍ່ພຽງພໍໃນປີນີ້ |
| 56 | ອຸດົມໄຊ | ເມືອງປາກແບງ | ໂຕະຕັ່ງນັກຮຽນ | ມີກດູ | ມີກສະດອງ | ງົບບໍ່ພຽງພໍໃນປີນີ້ |
| 57 | ອຸດົມໄຊ | ເມືອງປາກແບງ | ໄຟເຂົ້າໂຮງຮຽນແລະໂທລະໂຄງ | ຈອມແລງໃຫຍ່ | ຈອມແລງໃຫຍ່ | ງົບບໍ່ພຽງພໍໃນປີນີ້ |
| 58 | ອຸດົມໄຊ | ເມືອງປາກແບງ | ຕຳລາຮຽນ/ອຸປະກອນການຮຽນ | ຈອມແລງໃຫຍ່ | ພູຊາງ | ງົບບໍ່ພຽງພໍໃນປີນີ້ |
| 59 | ອຸດົມໄຊ | ເມືອງປາກແບງ | ອຸປະກອນໂຕະຕັ່ງ | ຈອມແລງໃຫຍ່ | ພູສຸງ | ງົບບໍ່ພຽງພໍໃນປີນີ້ |

| | | | | | | |
|---|---|---|---|---|---|---|
| 60 | ອຸດົມໄຊ | ເມືອງປາກແບງ | ຕູ້ຢາປະຈຳບ້ານ | ໄຊຊະນະ | ພູລວງ | ລົດມີແຜນປັບປຸງ |
| 61 | ອຸດົມໄຊ | ເມືອງປາກແບງ | ສ້ອມແປງທາງເຂົ້າຫາບ້ານ | ລອງໄຕ່ງ | ພຽງ | ບໍ່ເໝາະສົມກັບງົບປະມານທາງສັ້ນໄພດ |
| 62 | ຫລວງພະບາງ | ເມືອງປາກແຊງ | ສ້ອມແປງລະບົບນ້ຳລິນ | ກຸ່ມບ້ານບວມພະແສງ | ບ້ານ ຫ້ວຍອັດ | ເປັນໄປບໍ່ໄດ້ ຍ້ອຍບ້ານບໍ່ມີແຫຼງນ້ຳ |
| 63 | ຫລວງພະບາງ | ເມືອງວຽງຄຳ | ສ້ອມແປງເສັ້ນທາງລົດ | ກຸ່ມບ້ານ ດອນຄູນ | ບ. ໃໝ່ | ຖືກແຜນຂອງລັດເຂົ້າ |
| 64 | ຫລວງພະບາງ | ເມືອງວຽງຄຳ | ທຶນຊື້ຄຳລາຮຽນ | ກຸ່ມບ້ານ ແສ້ | ບ. ຈັກກາງ, | ທາງຂະແໜງການທີ່ກ່ຽວຂ້ອງບໍ່ເຫັນດີໃຫ້ເຮັດ |
| 65 | ຫລວງພະບາງ | ເມືອງວຽງຄຳ | ຕູ້ຢາປະຈຳບ້ານ | ກຸ່ມບ້ານ ສາມຕົ້ນ | ສາມຕົ້ນ, ພອນຄຳ, ພອນງາມ,ຫ້ວຍຊວງ | ທາງຂະແໜງການທີ່ກ່ຽວຂ້ອງບໍ່ເຫັນດີໃຫ້ເຮັດ |
| 66 | ຫລວງພະບາງ | ເມືອງວຽງຄຳ | ສ້ອມແປງທາງ | ກຸ່ມບ້ານ ສາມຊຸມ | ບ. ຫ້ວຍກົ້ | ງົບປະມານເກີນໄດງການ ໄດ້ຍ້າຍມາຢູ່ປີທີ 2 ຮອບວຽນ 11 |
| 67 | ຫລວງພະບາງ | ເມືອງວຽງຄຳ | ສ້ອມແປງທາງເຂົ້າບ້ານ | ກຸ່ມບ້ານ ສິບເຮືອງ | ບ. ປ່າໄຜ່ | ງົບປະມານເກີນໄດງການ ໄດ້ຍ້າຍມາຢູ່ປີທີ 2 ຮອບວຽນ 11 |
| 68 | ຫລວງພະບາງ | ເມືອງນ້ຳບາກ | ເຫຼັກໜານລ້ອມເຂດລ້ຽງສັດ | ກຸ່ມບ້ານ ນ້ຳດ່ອນ | ບ. ຫ້ວຍເສືອ | ປະຊາຊົນບໍ່ຮັບເອົາ |
| 69 | ຫລວງພະບາງ | ເມືອງໂພນໄຊ | ຕູ້ຢາປະຈຳບ້ານ | ກຸ່ມໂພນທອງ | ບ້ານວຽງຈະລີນ,ວັງຄຳ ,ນາກາມ,ແກ້ວລ້າ, ນາເງິນ ,ນາຍອຍ | ທາງຂະແໜງການທີ່ກ່ຽວຂ້ອງບໍ່ເຫັນດີໃຫ້ເຮັດ |
| 70 | ຫລວງພະບາງ | ເມືອງໂພນໄຊ | ອຸປະກອນໂຕະຕັ່ງນັກຮຽນ | ກຸ່ມບ້ານ ເປີນສູງ | ບ. ລ້ອງຍົມ | ເອົາເຂົ້າໃນກິດຈະກຳໂຮງຮຽນຂະນຸບານ ບ້ານ ລ້ອງເກ້ງ(ບ້ານລ້ອງເກງເປັນບ້ານທີ່ປ່ຽນຊື່ມາຈາກບ້ານ ຜາແດັ່ມກະລ່າງກອງ) |
| 71 | ອັດຕະປື | ຊານໄຊ | ນ້ຳສ້າງຊຸດ | ນ້ຳຊູ | ດາກມົງ | ງົບປະມານກຸ່ມບໍ່ພຽງພໍ |
| 72 | ອັດຕະປື | ສະໜາມໄຊ | ຂົວຂ້າມຫ້ວຍຕະເປິງນາງ | ປາກບໍ່ (ແບ່ງວິໄລ) | ດອນ | ງົບປະມານກຸ່ມບໍ່ພຽງພໍ |
| 73 | ອັດຕະປື | ສະໜາມໄຊ | ທາງຊອຍບ້ານ | ປາກບໍ່ (ແບ່ງວິໄລ) | ກະແຊະ | ຖືກແຜນເລີ່ງລັດຂອງລັດຖະບານກໍ່ສ້າງແລ້ວ |
| 74 | ອັດຕະປື | ສະໜາມໄຊ | ທາງຊອຍບ້ານ | ປາກບໍ່ (ແບ່ງວິໄລ) | ຈັນຕໍ | ງົບປະມານກຸ່ມບໍ່ພຽງພໍ |
| 75 | ອັດຕະປື | ສະໜາມໄຊ | ທາງຊອຍບ້ານ | ປາກບໍ່ (ແບ່ງວິໄລ) | ພອນມະນີ | ຖືກແຜນເລີ່ງລັດຂອງລັດຖະບານກໍ່ສ້າງແລ້ວ |
| 76 | ອັດຕະປື | ສະໜາມໄຊ | ທາງຊອຍບ້ານ | ໃຫຍ່ແຫ | ທ່າອອນ | ງົບປະມານກຸ່ມບໍ່ພຽງພໍ |
| 77 | ອັດຕະປື | ສະໜາມໄຊ | ທາງຊອຍບ້ານ | ໃຫຍ່ແຫ | ດອນບົກ | ງົບປະມານກຸ່ມບໍ່ພຽງພໍ |
| 78 | ອັດຕະປື | ສະໜາມໄຊ | ທາງຊອຍບ້ານ | ໃຫຍ່ແຫ | ດອນມ່ວງ | ງົບປະມານກຸ່ມບໍ່ພຽງພໍ |

ໂຄງການເພີ່ມຂຶ້ນມາໃໝ່

| ລ/ດ | ແຂວງ | ເມືອງ | ຊື່ໂຄງການ | ກຸ່ມ | ບ້ານ | ໂຄງການເພີ່ມຂຶ້ນມາໃໝ່( ໃຫ້ເຫດຜົນ) |
|---|---|---|---|---|---|---|
| 1 | ຫລວງນໍ້າທາ | ລອງ | ຈັດສັນສະຖານທີ່ລ້ຽງສັດນອກບ້ານ | ສົມປານ | ແມ່ໄຊງ | ງົບຂອງກຸ່ມພາຍໃນສົກປະຍັງເຫລືອ |
| 2 | ຫົວພັນ | ຊໍາເໜືອ | ກໍ່ສ້າງນໍ້າລິນ | ເມືອງແອ່ນ | ນາຄໍາ | ງົບຂອງກຸ່ມພາຍໃນສົກປະຍັງເຫລືອ |
| 3 | ຫົວພັນ | ຊໍາໃຕ້ | ກໍ່ສ້າງຫ້ອງນໍ້າເພດານໂຮງຮຽນ | ລ້ອງແກ້ມ | ນາງົ້ວ | ງົບຂອງກຸ່ມພາຍໃນສົກປະຍັງເຫລືອ |
| 4 | ຫລວງພະບາງ | ເມືອງປາກແຊ່ງ | ກໍ່ສ້າງລະບົບນໍ້າລິນ | ກຸ່ມບ້ານຫາດພອນ | ປຸ່ງຊ່າ | ເບື້ອງຕົ້ນແມ່ນມີ 1 ໂຄງການ ແຕ່ຍ້ອນບ້ານຫ່າງໄກກັນຫລາຍຈຶ່ງເຮັດໃຫ້ຂຽນບົດສະເໜີໂຄງການຍ່ອຍຂອງໃຜລາວ |
| 5 | ຫລວງພະບາງ | ເມືອງປາກແຊງ | ກໍ່ສ້າງລະບົບນໍ້າລິນ | ກຸ່ມບ້ານຫາດພອນ | ລ້ອງເອື້ອງ | ເບື້ອງຕົ້ນແມ່ນມີ 1 ໂຄງການ ແຕ່ຍ້ອນບ້ານຫ່າງໄກກັນຫລາຍຈຶ່ງເຮັດໃຫ້ຂຽນບົດສະເໜີໂຄງການຍ່ອຍຂອງໃຜລາວ |
| 6 | ຫລວງພະບາງ | ເມືອງປາກແຊງ | ກໍ່ສ້າງລະບົບນໍ້າລິນ | ກຸ່ມບ້ານບອມກອກ | ງົ້ວ | ເບື້ອງຕົ້ນແມ່ນມີ 1 ໂຄງການ ແຕ່ຍ້ອນບ້ານຫ່າງໄກກັນຫລາຍຈຶ່ງເຮັດໃຫ້ຂຽນບົດສະເໜີໂຄງການຍ່ອຍຂອງໃຜລາວ |

| | |
|---|---|
| ຈ/ນ ໂຄງການເບື້ອງຕົ້ນ | 465 |
| ຈ/ນ ໂຄງການທີ່ບໍ່ສາມາດຈັດຕັ້ງປະຕິບັດ | 78 |
| ຈ/ນ ໂຄງການ  ເພີ່ມໃໝ່ | 6 |
| ຈ/ນ ໂຄງການຈັດຕັ້ງປະຕິບັດຕົວຈິງ | 393 |